ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-20 ກໍລະກົດ 2022
ປີທີ 11
ສະບັບທີ 860

## ກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ທົ່ວປະຊ

(ສພຊ) ວັນທີ 9 ກໍລະກົດ ຜ່ານມາ, ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງທົ່ວປະເທດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານຄະນະປະຈຳສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ບັນດາທ່ານຮອງປະທານກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ຄະນະກົມ, ຄະນະສູນ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງເຂົ້າຮ່ວມ.






ທັງນີ້, ກໍເພື່ອສະຫລຸບຕີລາຄາການນຳພາ-ຊີ້ນຳ ຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ການພົວພັນປະສານງານ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ປຶກສາຫາລື, ຮັບຟັງຄຳຄິດເຫັນ ກໍຄືຂໍ້ສະເໜີຕ່າງໆຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອສ້າງຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານປະສານງານ ເຊິ່ງກັນແລະກັນ; ກອງປະຊຸມຍັງໄດ້ຮັບຟັງການຜ່ານບົດສະຫລຸບກ່ຽວກັບການນຳພາ-ຊີ້ນຳ ຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ການພົວພັນປະສານງານກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນໄລຍະແຕ່ກອງປະຊຸມຄັ້ງປະຖົມມະລຶກ ເຖິງກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ທິດທາງແຕ່ນີ້ ຫາກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາ

ອ່ານຕໍ່ໜ້າ 2

## ຄວາມສາມັກຄີແບບພິເສດ ລາວ-ຫວຽດນາມ ເປັນຕົວແບບທີ່ຫາຍາກໜຶ່ງດຽວໃນໂລກ

**ໂດຍ: ຄຳວິສັນ ແກ້ວສຸວັນ**

ສອງຊາດລາວ-ຫວຽດນາມ ໄດ້ມີການພົວພັນຖານບ້ານໃກ້ເຮືອນຄຽງທີ່ດີນຳກັນມາແຕ່ບູຮານນະການ, ປະຊາຊົນສອງຊາດໄດ້ດຳລົງຊີວິດ ແລະ ທຳມາຫາກິນບົນຜືນແຜ່ນດິນທີ່ມີສາຍພູຫລວງຍາວຢຽດ ແລະ ແມ່ນ້ຳຫລາຍສາຍຕິດຈອດກັນແຕ່ເໜືອຮອດໃຕ້, ໄດ້ມີຄວາມສາມັກຄີຮັກແພງຊ່ວຍເຫລືອອຸ້ມຊູກັນເໝືອນດັ່ງອ້າຍນ້ອງຮ່ວມອຸທອນ, ໃນຍາມທຸກກໍ່ຮ່ວມທຸກ ແລະ ຍາມສຸກກໍ່ຮ່ວມສຸກນຳກັນຕະຫລອດມາ, ທັງໄດ້ຜ່ານການທົດສອບໃນຂະບວນວິວັດແຫ່ງການຕໍ່ສູ້ກູ້ຊາດຕ້ານພວກລ່າເມືອງຂຶ້ນຕ່າງດ້າວ ອັນຍືດເຍື້ອຍາວນານ ແລະ ສຸດແສນລະອິດລະອ້ຽວຂ້ຽວຂາດ ເຊິ່ງສອງຊາດລາວ-ຫວຽດນາມ ໄດ້ອີງຫລັງໃສ່ກັນ, ຊ່ວຍເຫລືອກັນຖານສະຫາຍອ້າຍນ້ອງ ບົນຈິດໃຈສາກົນອັນບໍລິສຸດຜຸດຜ່ອງ ແລະ ໝົດຈິດໝົດໃຈ; ໄດ້ມີຄວາມຮັກແພງເຊື່ອໝັ້ນເຊິ່ງກັນ ແລະ ກັນອັນເລິກເຊິ່ງ, ຍອມເສຍສະຫລະເພື່ອກັນ ແລະ ຮ່ວມເປັນຮ່ວມຕາຍນຳກັນ. ອັນນັ້ນແມ່ນບໍ່ເກີດຂອງຄວາມສາມັກຄີແບບພິເສດເຊິ່ງເປັນຄວາມຮຽກຮ້ອງຕ້ອງການພາວະວິໄສ ແລະ ເປັນປັດໄຈຕັດສິນຜົນສຳເລັດ ແລະ ໄຊຊະນະຂອງການປະຕິວັດຢູ່ສອງປະເທດພວກເຮົາ, ເປັນຕົວແບບທີ່ຫາໄດ້ຍາກໜຶ່ງໃນໂລກ, ເປັນການພົວພັນທີ່ຍິ່ງໃຫຍ່, ເລິກເຊິ່ງ, ດູດດື່ມ ແລະ ເປັນມໍຣະດົກລ້ຳຄ່າຂອງທັງສອງຊາດລາວ-ຫວຽດນາມ.

ເມື່ອເວົ້າເຖິງຄວາມສາມັກຄີແບບພິເສດນີ້,ການນຳຜູ້ໃຫ້ກຳເນີດ, ຜູ້ນຳພາການປະຕິວັດທີ່ເປັນຕົ້ນແບບໃນການນຳພາພາລະກິດປະຕິວັດຂອງສອງປະເທດຈົນໄດ້ຮັບໄຊຊະນະຕ່າງໆ ກໍໄດ້ກ່າວໄວ້ວ່າ: ສາຍພົວພັນທີ່ບໍລິສຸດຜຸດຜ່ອງຂອງພັກ, ສອງປະເທດ

ອ່ານຕໍ່ໜ້າ 3

## ວາງພວງມາລາ ອະດີດນາຍົກລັດຖະມົນຕີ ຍີ່ປຸ່ນ



(ສພຊ) ວັນທີ 13 ກໍລະກົດ ຜ່ານມາ, ທີ່ສະຖານເອກອັກຄະຣາຊະທູດ ແຫ່ງ ປະເທດຍີ່ປຸ່ນ ປະຈຳ ສປປ ລາວ, ທ່ານ ສົນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ຕາງໜ້າສະພາແຫ່ງຊາດ, ບັນດາສະມາຊິກສະພາແຫ່ງຊາດ, ປະຊາຊົນລາວບັນດາເຜົ່າ ໄດ້ວາງພວງມາລາ ເພື່ອໄວ້ອາໄລເຖິງທ່ານ ຊິນໂຊ ອາເບະ (Shinzo Abe) ອະດີດນາຍົກລັດຖະມົນຕີ ແຫ່ງ ປະເທດຍີ່ປຸ່ນ.

ທ່ານ ຊິນໂຊ ອາເບະ ເປັນ

ອ່ານຕໍ່ໜ້າ 2

## ກປຊສ ປຶກສາຫາລືກະກຽມຄວາມພ້ອມໃນການຈັດສຳມະນາ



(ສພຊ) ວັນທີ 11 ກໍລະກົດ ຜ່ານມາ, ທີ່ສະພາແຫ່ງຊາດ ກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ສະພາແຫ່ງຊາດ ໄດ້ຈັດກອງປະຊຸມປຶກສາຫາລືກະກຽມຄວາມພ້ອມໃນການຈັດສຳມະນາ ຢູ່ກະຊວງປ້ອງກັນຄວາມສະຫງົບ ພາຍໃຕ້ຫົວຂໍ້: “ຍຸກສູງບົດບາດ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ສົມທົບກັບການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃນກຳລັງຄວາມສະຫງົບ ແລະ ປ້ອງກັນຊາດ

ອ່ານຕໍ່ໜ້າ 2

## ສະຫະພັນແມ່ຍິງ ສພຊ ເອົາໃຈໃສ່ຈັດຕັ້ງປະຕິບັດ ຂໍ້ແຂ່ງຂັນ 3 ດີ ຕິດພັນກັບຂະບວນການຮັກຊາດພັດທະນາ

ເນື່ອງໃນໂອກາດຂ່ຳນັບຮັບຕ້ອນ ແລະ ສະເຫລີມສະຫລອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 67 ປີ (20/07/1955-20/07/2022); ທ່ານ ນາງ ມະນີວັນ ເຍຍປາວເຮີ ປະທານສະຫະພັນແມ່ຍິງສະພາແຫ່ງຊາດ ທັງເປັນຮອງປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ໃຫ້ສຳພາດກັບສື່ມວນຊົນ ໃນວັນທີ 15 ກໍລະກົດ 2022 ວ່າ: ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງ ແລະ ຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫລືອຕໍ່ການນຳພາຂອງພັກປະຊາຊົນປະຕິວັດລາວ, ສະພາແຫ່ງຊາດ (ສພຊ), ລັດຖະບານ, ຄະນະພັກແຕ່



ລະຂັ້ນເຊິ່ງຍາມໃດກໍໄດ້ມີນະໂຍບາຍ, ໃຫ້ຄວາມເອົາໃຈໃສ່ຊີ້ນຳ-ນຳພາ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ, ເອົາໃຈໃສ່ພັດທະນາແມ່ຍິງ

ອ່ານຕໍ່ໜ້າ 7


ໜ້າ 4


ໜ້າ 4


ໜ້າ 4



ໜ້າ 7


ໜ້າ 5


ໜ້າ 4

**ຊົມເຊີຍວັນສ້າງຕັ້ງສະຫະພັນແມ່ຍິງລາວ (20/7/1955-20/7/2022) ຄົບຮອບ 67 ປີ ຢ່າງສຸດໃຈ!**

## ກອງປະຊຸມ...



ແຫ່ງຊາດ ຊຸດທີ IX; ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງຈໍານວນໜຶ່ງ.

ໂອກາດດັ່ງກ່າວ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄໍາເຫັນໂອ້ລົມຕໍ່ກອງປະຊຸມວ່າ: ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງເຖິງບໍ່ແມ່ນສາຍຕັ້ງກັນ ແຕ່ໄດ້ກໍານົດໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ມາດຕາ 86 ແລະ ມີມະຕິຂອງຄະນະປະຈໍາສະພາແຫ່ງຊາດ ກ່ຽວກັບການພົວພັນປະສານງານ ຄື: ການສ້າງ, ປັບປຸງ ກົດໝາຍ ແລະ ນິຕິກໍາ; ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ;ການຕົກລົງບັນຫາສໍາຄັນທີ່ຕິດພັນກັບທ້ອງຖິ່ນ; ການສ້າງຄວາມເຂັ້ມແຂງໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານວິຊາການ ຂອງສະພາປະຊາຊົນຂັ້ນແຂວງ; ການກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ພ້ອມນັ້ນ, ທ່ານຍັງມີຄໍາເຫັນເນັ້ນຕື່ມວ່າ: ໃນນາມຕາງໜ້າຄະນະປະຈໍາສະພາແຫ່ງຊາດ ຂໍໃຫ້ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ກໍຄືປະທານສະພາປະຊາຊົນຂັ້ນແຂວງ, ບັນດາກໍາມາທິການ ແລະ ກົງຈັກເສນາທິການ ຈົ່ງໄດ້ນໍາເອົາເນື້ອໃນຂອງກອງປະຊຸມຄັ້ງນີ້ໄປຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ວຽກງານມີບາດກ້າວໃໝ່ດີຂຶ້ນເລື້ອຍໆ.

(ອານຸສອນ ພູມມີທອນ)

## ວາງພວງມາລາ...

ຜູ້ນໍາທີ່ມີວິໄສທັດກວ້າງໄກ ແລະ ເປັນຜູ້ມີບົດບາດສໍາຄັນໃຫຍ່ຫລວງ ໃນການຊີ້ນໍາ-ນໍາພາ ກໍຄືການຍົກສູງຖານະບົດບາດຂອງປະເທດຍີ່ປຸ່ນ ໃນເວທີພາກພື້ນ ແລະ ສາກົນ, ພ້ອມທັງເປັນຜູ້ນໍາທີ່ປະກອບສ່ວນສໍາຄັນໃນການຊຸກຍູ້ສົ່ງເສີມ ແລະ ເພີ່ມທະວີການພົວພັນ ແລະ ການຮ່ວມມື ທີ່ມີມາແຕ່ດົນນານ ລະຫວ່າງ ສປປລາວ ແລະ ປະເທດຍີ່ປຸ່ນ ແລະ ກ້າວໄປເຖິງຍົກລະດັບຂຶ້ນເປັນຄູ່ຮ່ວມຍຸດທະສາດ. ໃນໄລຍະເວລາແຫ່ງຄວາມໂສກເສົ້າເສຍດາຍຕໍ່ການຈາກໄປຂອງທ່ານຄັ້ງນີ້ ໃນນາມຕາງໜ້າສະພາແຫ່ງຊາດ, ບັນດາສະມາຊິກສະພາແຫ່ງຊາດ, ປະຊາຊົນລາວບັນດາເຜົ່າ ແລະ ໃນນາມສ່ວນຕົວ ຂໍແບ່ງປັນຄວາມເສົ້າໂສກເສຍໃຈ, ຄວາມອາໄລອາວອນຢ່າງສຸດຊຶ້ງ ຮ່ວມກັບລັດຖະສະພາ, ລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ກໍຄືຄອບຄົວ, ຍາດພີ່ນ້ອງ ແລະ ເພື່ອນມິດຂອງທ່ານ ຊິນໂຊ ອາເບະ ມານະທີ່ນີ້ດ້ວຍ.

(ສົມນຶກ ແກ້ວໄຊຍະຈັກ)

## ກປຊສ...

ຂັ້ນສູນກາງ" ໂດຍການປະທານກອງປະຊຸມຂອງທ່ານ ພົຕ. ວົງສັກ ພັນທະວົງ ປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຂົ້າຮ່ວມມີບັນດາທ່ານຮອງປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ; ຮອງຫົວໜ້າກົມໃຫຍ່ສັນຕິພາບ; ພະນັກງານ-ວິຊາການ ແລະ ພາກສ່ວນກ່ຽວຂ້ອງກ່ອນເຂົ້າຮ່ວມ.




## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ຫອມສະນິດ**

❑ *ສູນໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້ ກະຊວງສາທາລະນະສຸກ ໄດ້ໃຫ້ຮູ້ວ່າ: ປັດຈຸບັນ ສປປລາວ ຍັງບໍ່ທັນມີວັກຊີນ ຫລື ຢາປົວສະເພາະພະຍາດໄຂ້ຍຸງລາຍ ແຕ່ຖ້າຫາກຄົນເຈັບໄດ້ຮັບການເບິ່ງແຍງທີ່ຖືກຕ້ອງຈາກແພດໝໍຈະສາມາດປ້ອງກັນການເຈັບເປັນຮຸນແຮງ ແລະ ເສຍຊີວິດໄດ້; ສໍາລັບຕົວເລກຜູ້ຕິດເຊື້ອພະຍາດໄຂ້ຍຸງລາຍ ທົ່ວປະເທດມີຜູ້ຕິດເຊື້ອພະຍາດໄຂ້ຍຸງລາຍສະສົມແຕ່ຕົ້ນປີ 2022 ເຖິງປັດຈຸບັນມີ 8.222 ຄົນ ແລະ ເສຍຊີວິດ 12 ຄົນ; ແຂວງທີ່ມີລາຍງານຜູ້ຕິດເຊື້ອຫລາຍກວ່າໝູແມ່ນນະຄອນຫລວງວຽງຈັນ 4.149 ຄົນ, ສາລະວັນ 774 ຄົນ, ເຊກອງ 720 ຄົນ, ອັດຕະປື 597 ຄົນ, ຫລວງນໍ້າທາ 546 ຄົນ, ສະຫວັນນະເຂດ 333 ຄົນ ແລະ ຫລວງພະບາງ 252 ຄົນ. ສ່ວນຜູ້ເສຍຊີວິດຈາກພະຍາດດັ່ງກ່າວ ມີນະຄອນຫລວງວຽງຈັນ 5 ຄົນ, ອັດຕະປື 3 ຄົນ, ສາລະວັນ 2 ຄົນ, ອຸດົມໄຊ ແລະ ຊຽງຂວາງ ແຂວງລະ 1 ຄົນ.*

***ນສພ. ປະເທດລາວ 14/07/202***

❑ *ໃນປີນີ້, ລັດຖະບານກໍຄືກະຊວງກະສິກໍາ ແລະ ປ່າໄມ້ ໄດ້ສົມທົບກັບຄະນະພັກ, ອໍານາດການປົກຄອງໃນທົ່ວປະເທດ ສູ້ຊົນປ່ອຍປາລົງສູ່ແຫລ່ງນໍ້າທໍາມະຊາດ, ບຶງ, ໜອງ ແລະ ອື່ນໆ ໃຫ້ໄດ້ 80 ລ້ານໂຕ ເພື່ອສ້າງຄວາມອຸດົມສົມບູນໃຫ້ແກ່ແຫລ່ງນໍ້າຕ່າງໆ ທັງເປັນການປະກອບສ່ວນສ້າງສາພັດທະນາເສດຖະກິດ-ສັງຄົມ, ປຸກຈິດສໍານຶກແກ່ສັງຄົມຮູ້ຈັກປົກຮັກສາສັດນໍ້າ-ສັດປ່າ ໃຫ້ຫລາຍຂຶ້ນ.*

***ນສພ. ປະເທດລາວ 15/07/2022***

❑ *ນະຄອນຫລວງວຽງຈັນ ໄດ້ຖືກຮັບຮອງເປັນນະຄອນຫລວງສຸຂານາໄມ ເປັນນະຄອນຫລວງທໍາອິດ ໃນພາກພື້ນອາຊຽນ ທີ່ໄດ້ຮັບການປະກາດເປັນນະຄອນຫລວງສຸຂານາໄມ ເຊິ່ງເປັນແຂວງທີ 2 ຖັດຈາກແຂວງບໍລິຄໍາໄຊ ທີ່ສາມາດບັນລຸຂີດໝາຍອັນສໍາຄັນນີ້ ຫລັງຈາກແຂວງບໍລິຄໍາໄຊ ໄດ້ຢຸດຕິການຖ່າຍຊະຊາຍ ໃນປີ 2020; ໃນປັດຈຸບັນ, ມີຫລາຍກວ່າ 5.000 ບ້ານ 37 ເມືອງ ແລະ 2 ແຂວງ ທີ່ບັນລຸເປົ້າໝາຍດັ່ງກ່າວໄດ້ແລ້ວ.*

***ນສພ. ວຽງຈັນໃໝ່ 15/07/2022***

❑ *ດ່ານສາກົນຂົວມິດຕະພາບ II ສະຫວັນນະເຂດ-ມຸກດາຫານ ໄດ້ເປີດທົດລອງການເສຍຄ່າທໍານຽມ ແລະ ຄ່າບໍລິການຜ່ານລະບົບ Easy Pass ຜ່ານທະນາຄານ ເຊິ່ງເປັນລະບົບທີ່ວ່ອງໄວ, ໂປ່ງໃສ, ສາມາດກວດສອບຄືນໄດ້ ພ້ອມທັງຮັບປະກັນຄວາມປອດໄພດ້ານຂໍ້ມູນ ແລະ ການແລກປ່ຽນຂໍ້ມູນຂອງຂະແໜງການເງິນກັບຂະແໜງການອື່ນໆ ເຊິ່ງລະບົບດັ່ງກ່າວແມ່ນຜູ້ໃຊ້ບໍລິການຢູ່ດ່ານສາກົນຈະໄດ້ຈ່າຍເງິນຢູ່ຈຸດດຽວ ແລ້ວໃຊ້ໃບບິນຂອງທະນາຄານທີ່ມີຄິວອາໂຄດ ແຈ້ງຕໍ່ເຈົ້າໜ້າທີ່ປະຈໍາດ່ານ ເພື່ອສະແກນໃສ່ເຄື່ອງກໍສາມາດຜ່ານເຂົ້າ-ອອກດ່ານໄດ້.*

***ນສພ. ປະຊາຊົນ 15/07/2022***

## ຄວາມສາມັກຄີ...

ໄດ້ກາຍເປັນສາຍພົວພັນທີ່ເປັນຕົວແບບໜຶ່ງດຽວຫາຍາກໃນໂລກ, ດັ່ງປະທານ ໄກສອນ ພົມວິຫານ ໄດ້ຢືນຢັນວ່າ: “ໃນປະຫວັດສາດຂອງການປະຕິວັດໂລກ ກໍໄດ້ມີຫລາຍແບບຢ່າງທີ່ເປັນແວ່ນໃຫ້ເຫັນເຖິງນ້ຳໃຈສາກົນກຳມະຊີບ, ແຕ່ກໍບໍ່ມີບ່ອນໃດທີ່ຄວາມສາມັກຄີ, ສຳພັນສູ້ຮົບທີ່ພິເສດ, ຍາວນານ ແລະ ຮອບດ້ານແບບນີ້ ແລະ ປະທານ ໂຮ່ຈິມິນ ກໍກັ່ນກອງໃນບົດກະວີຂອງເພິ່ນວ່າ: ຮັກຫອມກັນໝາຍໝັ້ນ ຫລາຍສັນພູກໍ່ປີນໄຕ່ ຫລາຍນ້ຳໃຫຍ່ ແລະ ໂຄກຄ້ອຍຂວາງກັ້ນກໍດຸ່ງໄປ ສອງຊາວລາວ-ຫວຽດນາມໄດ້ຝັງຮັກຢູ່ໃນໃຈ ຣົງຣາທັງແມ່ນ້ຳຂອງບໍ່ເລີກປຸນປານໄດ້”

ສ່ວນປະທານ ສຸພານຸວົງ ໄດ້ກ່າວວ່າ: “ສາຍພົວພັນສາມັກຄີແບບພິເສດ ລາວ-ຫວຽດນາມ, ຫວຽດນາມ-ລາວ ແມ່ນສູງກວ່າພູຜາໃດໆ, ຍາວກວ່າແມ່ນ້ຳທຸກສາຍ, ກວ້າງກວ່າມະຫາສະໝຸດ, ສວຍງາມກວ່າດວງເດືອນວັນເພັງ, ຫອມຫວນກວ່າດອກໄມ້ທີ່ຫອມທີ່ສຸດ”

I. ຄວາມສາມັກຄີແບບພິເສດ ລາວ-ຫວຽດນາມ ແມ່ນຄວາມຮຽກຮ້ອງຕ້ອງການພາວະວິໄສ ແລະ ເປັນປັດໃຈຕັດສິນໄຊຊະນະຂອງການປະຕິວັດສອງປະເທດ ສະແດງອອກດັ່ງນີ້:

- ການກຳເນີດ ແລະ ເຕີບໃຫຍ່ເຂັ້ມແຂງຂອງພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຫວຽດນາມໃນປັດຈຸບັນ ແມ່ນມາຈາກພັກກອມມູນິດອິນດູຈີນໃນເມື່ອກ່ອນໂດຍແມ່ນປະທານໂຮ່ຈິມິນເປັນຜູ້ກໍ່ຕັ້ງ ແລະ ຫລໍ່ຫລອມໃຫ້ເຕີບໃຫຍ່ເຂັ້ມແຂງຄືດັ່ງທຸກວັນນີ້, ສອງພັກມີອຸດົມການ ແລະ ແນວທາງນະໂຍບາຍຄ້າຍຄືດຽວກັນ, ສອງພັກໄດ້ຄຽງບ່າຄຽງໄຫລ່ຮ່ວມທຸກຮ່ວມສຸກ, ຮ່ວມສູ້ຮົບສັດຕູໂຕດຽວກັນ ແລະ ພ້ອມກັນຍາດເອົາໄຊຊະນະເປັນກ້າວໆມາ.

- ຜ່ານຂະບວນການປະຕິວັດໃນແຕ່ລະໄລຍະທີ່ລະອຽດລະອ້ຽວຂອງສອງຊາດລາວ-ຫວຽດນາມຄວາມສາມັກຄີແບບພິເສດດັ່ງກ່າວ ໄດ້ຜ່ານການທົດສອບແປວໄຟທີ່ດຸເດືອດຂ້ຽວຂາດ ແລະ ໄດ້ກາຍເປັນເຫງົ້າພະລັງອັນມະຫາສານ ເພື່ອໃຫ້ສອງປະເທດຍາດເອົາທຸກໄຊຊະນະເປັນກ້າວໆມາ ແລະ ຍິ່ງເຮັດໃຫ້ການພົວພັນສອງປະເທດນັບມື້ນັບເລິກເຊິ່ງ, ໜັກແໜ້ນ ແລະ ໝັ້ນຄົງຕະຫລອດໄປ.

- ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດທີ່ຫາຍາກ, ໜຶ່ງດຽວໃນໂລກ ແມ່ນພາລະກິດລວມຂອງມະຫາຊົນຊັ້ນຄົນຕ່າງໆຂອງສອງປະເທດ ເປັນຜູ້ເຂົ້າຮ່ວມ ແລະ ປະກອບສ່ວນໂດຍກົງເຂົ້າໃນການສ້າງ, ປັບປຸງ, ບູລະນະ ແລະ ພັດທະນາ ໃຫ້ນັບມື້ນັບເຕີບໃຫຍ່ເຂັ້ມແຂງ ໂດຍສືບທອດຈາກຄົນຮຸ່ນນີ້ໄປສູ່ຮຸ່ນຕໍ່ໆໄປ ພາຍໃຕ້ການນຳພາຂອງສອງພັກ ໄດ້ກາຍເປັນພາລະກິດແຫ່ງຄວາມຕື່ນຕົວ, ສະໝັກໃຈບົນຈິດໃຈຮັກຊາດອັນດູດດື່ມ, ຜ່ອງໃສ ແລະ ນ້ຳໃຈເສຍສະຫລະອັນສູງສົ່ງຂອງຊາດ; ລາວ-ຫວຽດນາມ ໄດ້ສ້າງເປັນກຳລັງແຮງອັນມະຫາສານໃນການຕີເອົາຊະນະຈັກກະພັດຜູ້ຮຸກຮານ ແລະ ພ້ອມກັນສືບຕໍ່ປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງຕົນຕາມຈຸດໝາຍສັງຄົມນິຍົມ.

II. ຄວາມໝາຍສຳຄັນໃນການສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ (05 ກັນຍາ 1962) ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ (18 ກໍລະກົດ 1977)

ພາຍຫລັງສົນທິສັນຍາເຊີແນວ ໃນວັນທີ 23 ກໍລະກົດ 1962 ກ່ຽວກັບລາວ ຍອມຮັບຮູ້ຄວາມເປັນເອກະລາດ, ເປັນກາງ, ເອກະພາບ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລາວ, ຮັບຮູ້ລັດຖະບານປະສົມ 3 ຝ່າຍທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 12 ມິຖຸນາ 1962, ສົນທິສັນຍາເຊີແນວປີ 1962 ກ່ຽວກັບລາວ ບໍ່ສະເພາະແຕ່ເປັນໄຊຊະນະທາງດ້ານການເມືອງ, ການທະຫານ, ການຕ່າງປະເທດ ແລະ ເປັນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍຕົວທີ່ມີລັກສະນະກະໂດດຂັ້ນຂອງກຳລັງປະຕິວັດລາວເທົ່ານັ້ນ, ແຕ່ຍັງແມ່ນໄຊຊະນະແຫ່ງຄວາມສາມັກຄີ, ການປະສານສົມທົບສູ້ຮົບຢ່າງແໜ້ນແຟ້ນລະຫວ່າງກອງທັບ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມອ້າຍນ້ອງໃນສະໜາມຮົບຕ້ານສັດຕູໂຕດຽວກັນ. ສົນທິສັນຍາເຊີແນວຍັງເປັນການເປີດໄລຍະແຫ່ງການຂະຫຍາຍຕົວໃໝ່ໃຫ້ແກ່ການປະຕິວັດຂອງສອງປະເທດ ລາວ-ຫວຽດນາມ, ດ້ວຍໂອກາດ ແລະ ເງື່ອນໄຂສະດວກດັ່ງກ່າວນັ້ນ, ສອງປະເທດໄດ້ສ້າງຕັ້ງການພົວພັນການທູດຢ່າງເປັນທາງການຂຶ້ນ ໃນວັນທີ 05 ກັນຍາ 1962; ການສ້າງສາຍພົວພັນການທູດຢ່າງເປັນທາງການໃນວັນທີ 05 ກັນຍາ 1962 ລະຫວ່າງລັດຖະບານສາທາລະນະລັດປະຊາທິປະໄຕ ຫວຽດນາມ ແລະ ລັດຖະບານລາຊະອານາຈັກລາວ(ລັດຖະບານປະສົມ 3 ຝ່າຍ) ແມ່ນເຫດການປະຫວັດສາດທີ່ມີຄວາມສຳຄັນທາງດ້ານການເມືອງ, ການຕ່າງປະເທດ ແລະ ການທະຫານລະຫວ່າງສອງປະເທດ, ເປັນຫລັກໝາຍສຳຄັນໃນການພົວພັນລະຫວ່າງສອງປະເທດ, ຢືນຢັນຄວາມຜູກພັນຊະຕາກຳຂອງສອງຊາດໃນການຕໍ່ສູ້ກູ້ຊາດຍາດເອົາເອກະລາດແຫ່ງຊາດ ແລະ ໂຮມປະເທດເປັນເອກະພາບຂອງປະຊາຊົນແຕ່ລະປະເທດ; ເຊິ່ງກ່ອນອື່ນໝົດແມ່ນເຮັດໃຫ້ລັດຖະບານຣາຊະອານາຈັກລາວຕ້ອງຕັດຄວາມສຳພັນການທູດກັບອຳນາດການປົກຄອງຫຸ່ນໄຊ່ງ່ອນ ທີ່ເປັນລູກແຫລ່ງຕີນມືຈັກກະພັດຂອງອາເມລິກາ ແລະ ດ້ານໜຶ່ງກໍເປັນການເປີດໂອກາດໃຫ້ຊາວໂລກຮັບຮູ້ວ່າລາວເປັນປະເທດໜຶ່ງທີ່ມີອຳນາດເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຕົນ, ປະຊາຊົນລາວ ມີອິດສະຫລະພາບຄືດຽວກັບປະຊາຊາດໃນໂລກ; ເປັນການເປີດກວ້າງການພົວພັນຮ່ວມມືກັບໂລກພາຍນອກໃຫ້ນັບມື້ນັບກວ້າງຂວາງ ເພື່ອຍາດແຍ່ງເອົາການສະໜັບສະໜູນຊ່ວຍເຫລືອຈາກບັນດາປະເທດທີ່ຮັກຫອມສັນຕິພາບໃນໂລກ, ບັນດາປະເທດໃນຄ້າຍສັງຄົມນິຍົມ; ພ້ອມກັນນັ້ນ, ກໍສົມທົບກຳລັງແຮງທັງພາຍໃນກັບພາຍນອກເພື່ອຕີຊະນະຈັກກະພັດອາເມລິການຜູ້ຮຸກຮານ.

ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ແລະ ສະຖາປະນາ ສປປລາວ ໃນວັນທີ 2 ທັນວາ 1975 ໃນສະພາບແວດລ້ອມທີ່ປະເທດຊາດພວກເຮົາແສນຫຍຸ້ງຍາກໃນທຸກດ້ານ ເປັນຕົ້ນແມ່ນດ້ານເສດຖະກິດ-ການເງິນ, ຊີວິດການເປັນຢູ່ ແຕ່ອັນໜັກໜ່ວງທີ່ສຸດແມ່ນສັດຕູ ແລະ ອິດທິກຳລັງປໍລະປັກ ສືບຕໍ່ດຳເນີນນະໂຍບາຍປິດລ້ອມປະເທດເຮົາໃນທຸກດ້ານ; ເພື່ອສືບຕໍ່ເສີມຂະຫຍາຍມູນເຊື້ອຄວາມສາມັກຄີແບບພິເສດການພົວພັນຮ່ວມມື ແລະ ສຳພັນສູ້ຮົບລະຫວ່າງສອງຊາດໃຫ້ນັບມື້ນັບແໜ້ນແຟ້ນເຂົ້າສູ່ລວງເລິກ ແລະ ໝັ້ນຄົງຂະນົງແກ່ນ ສອງປະເທດໄດ້ເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືໃນວັນທີ 18 ກໍລະກົດ 1977 ການເຊັນສັນຍາມິດຕະພາບ ແລະ ການຮ່ວມມືລະຫວ່າງສອງປະເທດແມ່ນຄວາມຈຳເປັນພາວະວິໄສ, ແມ່ນແນວທາງທີ່ຖືກຕ້ອງເປັນທຳ, ແມ່ນສອດຄ່ອງກັບກົດເກນແຫ່ງການພົວພັນສາກົນ ລະຫວ່າງຊາດໃນໂລກ, ເປັນການຫັນເນື້ອໃນຈິດໃຈແຫ່ງການພົວພັນອັນເປັນມູນເຊື້ອຍາວນານໃຫ້ກາຍເປັນນິຕິກຳ, ເປັນຂໍ້ກຳນົດທິດທາງ, ເປັນຫລັກການແຫ່ງການພົວພັນສາກົນໃນການພົວພັນແບບພິເສດລະຫວ່າງສອງປະເທດ; ອັນນີ້ເປັນການເປີດສັກກະລາດໃຫມ່ແຫ່ງການພົວພັນລະຫວ່າງສອງປະເທດໃນເງື່ອນໄຂໃໝ່, ເປັນການສືບຕໍ່ປັບປຸງ ແລະ ເສີມຂະຫຍາຍມູນເຊື້ອສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ຮ່ວມມືຮອບດ້ານ ໃນເງື່ອນໄຂພາລະກິດປະຕິວັດໃໝ່, ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໂດຍສະເພາະແມ່ນການຮຳບາດແຜຂອງສົງຄາມ, ຟື້ນຟູ, ປັບປຸງ ແລະ ບູລະນະຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ, ພ້ອມກັນນັ້ນ ກໍ່ດຳເນີນການສ້າງພື້ນຖານໂຄງລ່າງ, ວັດຖຸ-ເຕັກນິກເພື່ອກະກຽມໃຫ້ບາດກ້າວເດີນໃນຕໍ່ຫນ້າ; ເຮັດໃຫ້ຊາວໂລກຮັບຮູ້ ແລະ ເຂົ້າໃຈການພົວພັນຮ່ວມມືລະຫວ່າງສອງປະເທດແມ່ນບົນພື້ນຖານກົດໝາຍສາກົນ, ເປັນການພົວພັນທີ່ຖືກຕ້ອງເປັນທຳ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ຕີຖອຍຄຳບິດເບືອນໃສ່ຮ້າຍປ້າຍສີຂອງພວກຄົນບໍ່ດີ ແລະ ອິດທິກຳລັງປໍລະປັກ ທີ່ຫວັງຢາກມ້າງເພທຳລາຍສາຍພົວພັນລະຫວ່າງສອງຊາດລາວ-ຫວຽດນາມ; ສົນທິ ສັນຍາດັ່ງກ່າວຍັງເປັນນິຕິກຳອັນສຳຄັນໃຫ້ການສືບຕໍ່ຮັດແໜ້ນສາຍພົວພັນອັນເປັນມູນເຊື້ອ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ໃຫ້ນັບມື້ນັບເພີ່ມພູນຄູນສ້າງ, ເກີດດອກອອກຜົນ ແລະ ເຕີບໃຫຍ່ເຂັ້ມແຂງດັ່ງທຸກວັນນີ້.

III. ໃນຖານະເປັນພົນລະເມືອງລາວ ແລະ ທັງເປັນຮຸ່ນສືບທອດພາລະກິດປະຕິວັດຂອງສອງພັກ, ສອງລັດ, ສອງຊາດລາວ-ຫວຽດ, ຫວຽດນາມ-ລາວ ພວກເຮົາຮູ້ສຶກພາກພູມໃຈ ແລະ ຮູ້ບຸນຄຸນຕໍ່ການເສຍສະຫລະຂອງບັນພະບູລຸດ, ວິລະຊົນຮຸ່ນກ່ອນ; ຈຶ່ງພ້ອມກັນຕັດສິນໃຈເພີ່ມພູນຄູນສ້າງ; ຍົກສູງສາຍພົວພັນອັນບໍລິສຸດຜຸດຜ່ອງ, ຈິງອົກຈິງໃຈ, ໝົດຈິດໝົດໃຈເພື່ອກັນ ແລະ ກັນ; ຄຽງຂ້າງກັນພ້ອມກັນປົກປັກຮັກສາ ແລະ ພັດທະນາປະເທດຊາດຂອງຕົນໃຫ້ຈະເລີນພັດທະນາສູ່ຈຸດໝາຍສັງຄົມນິຍົມນັ້ນ ພວກເຮົາຕ້ອງເອົາໃຈໃສ່ປະຕິບັດໃຫ້ເປັນຈິງບາງບັນຫາດັ່ງລຸ່ມນີ້:

- ເດັດດ່ຽວປົກປັກຮັກສາມູນເຊື້ອຄວາມສາມັກຄີແບບພິເສດ ແລະ ຜົນສຳເລັດຂອງການຮ່ວມມືໃນໄລຍະຜ່ານມາ ໂດຍຖືເອົາການພົວພັນດ້ານການເມືອງເປັນເສົາຫລັກແຫ່ງການກຳນົດແນວທາງນະໂຍບາຍລວມແຫ່ງການພົວພັນຂອງສອງປະເທດທີ່ປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ແລະ ປະທານ ໂຮ່ຈິມິນ ໄດ້ລິເລີ່ມ ແລະ ໄດ້ກາຍເປັນເຂັ້ມທິດເຍືອງທາງ ເພື່ອໃຫ້ສອງປະເທດພວກເຮົາສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອການພົວພັນບໍລິສຸດຜຸດຜ່ອງ, ໃກ້ຊິດຕິດແທດໜຶ່ງດຽວໃນໂລກ. ສືບຕໍ່ເສີມຂະຫຍາຍຄວາມໄວ້ເນື້ອເຊື່ອໃຈກັນທາງດ້ານການເມືອງ, ຍຸດທະສາດຢ່າງບໍ່ຢຸດຢັ້ງ, ພ້ອມກັນແບກຫາບພາລະກິດປະຫວັດສາດຂອງການປົກປັກຮັກສາໝາກຜົນຂອງການປະຕິວັດ, ການສ້າງສາພັດທະນາປະເທດຊາດກ້າວຂຶ້ນຕາມຈຸດໝາຍສັງຄົມນິຍົມ, ປົກປັກຮັກສາສາຍພົວພັນແບບພິເສດລາວ-ຫວຽດນາມ ໃຫ້ໝັ້ນຄົງທະນົງແກ່ນຕະຫລອດການະນານ.

ບົນພື້ນຖານສາຍພົວພັນດ້ານການເມືອງທີ່ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນ, ພວກເຮົາຕ້ອງສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍການເສີມຂະຫຍາຍມູນເຊື້ອໃນການຄຽງບ່າຄຽງໄຫລ່ກັນຮ່ວມກັນຕໍ່ສູ້ເພື່ອຍາດເອົາເອກະລາດ ແລະ ເສລີພາບໃນເມື່ອກ່ອນ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ຮັ່ງມີເຂັ້ມແຂງໃນປັດຈຸບັນ; ການຮັດແໜ້ນການພົວພັນຮ່ວມມືດ້ານ ປກຊ-ປກສ ແມ່ນຄວາມຈຳເປັນພາວະວິໄສ ຂອງສອງປະເທດທີ່ບໍ່ສາມາດຕັດແຍກກັນໄດ້ແຕ່ໃດໆມາ ໂດຍສະເພາະແມ່ນໃນສະພາບການຜັນແປຢ່າງໄວວາ ແລະ ສັບສົນ, ຄາດຄະເນໄດ້ຍາກໃນປັດຈຸບັນ, ສອງປະເທດຕ້ອງສືບຕໍ່ປະສານສົມທົບກັນຢ່າງແໜ້ນແຟ້ນ ໃນການເພີ່ມທະວີວຽກງານ ປກຊ-ປກສ, ຮ່ວມກັນຮັກສາສະພາບແວດລ້ອມສັນຕິພາບ, ສະຖຽນລະພາບ, ປົກປັກຮັກສາເອກະລາດ, ອະທິປະໄຕ, ເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນ, ປ້ອງກັນ ແລະ ທັບມ້າງຢ່າງທັນການທຸກກົນອຸບາຍ “ຫັນປ່ຽນໂດຍສັນຕິ” ຂອງສັດຕູທີ່ຫວັງມ້າງເພທຳລາຍ ແລະ ແບ່ງແຍກຄວາມສາມັກຄີແບບພິເສດລະຫວ່າງສອງປະເທດ.

- ຖືເອົາວຽກງານສຶກສາ, ວຽກງານພັດທະນາຊັບພະຍາກອນມະນຸດ ເປັນຍຸດທະສາດທີ່ມີລັກສະນະບຸກທະລຸ ໂດຍການຍົກສູງຄຸນນະພາບການສຶກສາໃຫ້ການຄັດເລືອກນັກສຶກສາ, ການຄົ້ນຄວ້າຮ່ຳຮຽນ, ການສິດສອນຂອງຄູອາຈານ ເຊິ່ງບໍ່ພຽງແຕ່ເພື່ອຮັບໃຊ້ການພັດທະນາ ຂອງແຕ່ລະປະເທດເທົ່ານັ້ນ, ແຕ່ຍັງເປັນການປະກອບສ່ວນອັນສຳຄັນເຂົ້າໃນຮັດແໜ້ນສາຍພົວພັນ ແລະ ຄວາມສາມັກຄີແບບພິເສດລະຫວ່າງສອງປະເທດອີກດ້ວຍ.

- ສົ່ງເສີມການພົວພັນຮ່ວມມືດ້ານເສດຖະກິດ ໃຫ້ມີການບຸກທະລຸໃໝ່ ເພື່ອໃຫ້ສົມຄູ່ກັບສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດຂອງສອງປະເທດເຊິ່ງພວກເຮົາຕ້ອງພ້ອມກັນຄົ້ນຄິດໃໝ່, ເພື່ອມີຈິນຕະນາການຮ່ວມມືກັນແບບໃໝ່, ມີມາດຕະການ “ບຸກທະລຸ” ທີ່ເຂັ້ມແຂງ, ແກ້ໄຂບັນດາຂອດຂັ້ນທີ່ກີດໜ່ວງຖ່ວງດຶງ, ເພີ່ມທະວີການເປັນເຈົ້າການໃນການຍາດແຍ່ງດຶງດູດເອົາທຶນ, ການຄ້າ, ການຕະຫລາດ, ສະຕິປັນຍາຈາກຊ່ຽວຊານຜູ້ປະສົບຜົນສຳເລັດທາງເສດຖະກິດເພື່ອພ້ອມກັນນຳໃຊ້ທ່າແຮງເພື່ອພັດທະນາປະເທດໃຫ້ວ່ອງໄວ, ຍືນຍົງ ແລະ ເປັນເຈົ້າຕົນເອງ. ເພື່ອຫັນປ່ຽນພື້ນຖານເສດຖະກິດໄປສູ່ເສດຖະກິດດິຈິຕອນ, ພັດທະນາການນຳເອົາເອເລັກໂຕຣນິກ, ຫັນປ່ຽນບັນດາການບໍລິການດ້ານສຶກສາ, ການແພດ, ການເງິນ, ການທະນາຄານທັນສະໄໝໄປສູ່ດິຈິຕອນ ແລະ ຕ້ອງຍົກສູງຄວາມສາມາດໃນການແຂ່ງຂັນ, ຍົກສູງພື້ນຖານເສດຖະກິດໃນຍຸກການປະຕິວັດອຸດສາຫະກຳ 4.0 ເທື່ອລະກ້າວ.

- ເພີ່ມທະວີວຽກງານການໂຄສະນາ, ສຶກສາອົບຮົມກ່ຽວກັບມູນເຊື້ອສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານທີ່ເປັນສົມບັດອັນລ້ຳຄ່າເປັນຄວາມຕ້ອງການພາວະວິໄສ ແລະ ເປັນປັດໄຈຕັດສິນໄຊຊະນະຂອງການປະຕິວັດສອງປະເທດໃຫ້ກວ້າງຂວາງ, ເລິກເຊິ່ງ, ແຂງແຮງ ແລະ ຮອບດ້ານດ້ວຍຫລາຍຮູບຫລາຍສີ, ຫລາຍແບບໂດຍແທດເໝາະກັບສະພາບຕົວຈິງໃນແຕ່ລະເປົ້າໝາຍ ຕິດພັນກັບການຈັດຕັ້ງປະຕິບັດຕົວຈິງໃນຊີວິດສັງຄົມ ເພື່ອໃຫ້ປະຊາຊົນທຸກຊັ້ນຄົນ ໂດຍສະເພາະແມ່ນຄົນຮຸ່ນໜຸ່ມ, ຜູ້ທີ່ຈະສືບທອດອະນາຄົດຂອງປະເທດຊາດໄດ້ຮັບຮູ້, ເຂົ້າໃຈເຊື່ອມຊຶມມີຄວາມເຊື່ອໝັ້ນ ຮ່ວມມືກັນປົກປັກຮັກສາ ແລະ ເພີ່ມພູນຄູນສ້າງມູນເຊື້ອສາຍພົວພັນອັນດີງາມຄວາມສາມັກຄີແບບພິເສດລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດໃຫ້ແຕກດອກອອກຜົນຈະເລີນງອກງາມຕະຫລອດການະນານ.

ສາມາດເວົ້າໄດ້ວ່າ 60 ປີແຫ່ງການສ້າງສາຍພົວພັນການທູດ ແລະ 45 ປີ ແຫ່ງການເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງສອງປະເທດລາວ-ຫວຽດນາມ ແມ່ນໄລຍະເວລາແຫ່ງການທົດສອບຄວາມ ແໜ້ນແກ່ນແໜ້ນໜຽວ ຂອງສາຍພົວພັນລະຫວ່າງສອງປະເທດພວກເຮົາ. ເຖິງແມ່ນວ່າສະພາບແວດລ້ອມຂອງໂລກ ກໍຄືສາກົນໄດ້ຜັນແປໄປຢ່າງໄວວາສັບສົນທີ່ມີທັງກາລະໂອກາດ ແລະ ສິ່ງທ້າທາຍນາໆປະການກໍຕາມ, ແຕ່ພັກລັດ ແລະ ປະຊາຊົນລາວບັນດາເຜົ່າກໍໄດ້ເອົາໃຈໃສ່ເພີ່ມທະວີສ້າງໃຫ້ການພົວພັນຮ່ວມມືຂອງສອງຊາດ ຍິ່ງເພີ່ມພູນຄູນສ້າງໃຫ້ອຸດົມສົມບູນ ແລະ ໄດ້ຮັບການປັບປຸງຍົກລະດັບ ທັງທາງດ້ານປະລິມານ ແລະ ຄຸນນະພາບໃຫ້ສູງຂຶ້ນເລື້ອຍໆ. ເນື້ອໃນຂອງການຮ່ວມມືນັບມື້ເຂົ້າສູ່ລວງເລິກແທດຕົວຈິງ; ກົນໄກ ແລະ ວິທີການຕ່າງໆແມ່ນນັບມື້ຄ່ອງຕົວຍິ່ງຂຶ້ນ; ການພົວພັນຮ່ວມມືລະຫວ່າງທ້ອງຖິ່ນ, ຂະແໜງການມີປະສິດທິຜົນຫລາຍຂຶ້ນ ແລະ ຂົງເຂດຕ່າງໆນັບມື້ເປີດກ້ວາງອອກເຊິ່ງນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດພວກເຮົາ. ອັນນີ້ແມ່ນສະແດງອອກໃຫ້ເຫັນລັກສະນະພິເສດຂອງການພົວພັນຮ່ວມແບບພິເສດມີລາວ-ຫວຽດນາມ ທີ່ໄດ້ກາຍເປັນປັດໄຈຕັດສິນໄຊຊະນະຂອງການປະຕິວັດສອງປະເທດ.

ພັກ-ລັດ ແລະ ປະຊາຊົນລາວບັນດາເຜົ່າມີຄວາມພາກພູມໃຈ ແລະ ທະນົງໃຈ ທີ່ໄດ້ປະກອບສ່ວນສຸດຄວາມສາມາດຂອງຕົນ ເຂົ້າໃນການຮ່ວມສຳພັນສູ້ຮົບ ແລະ ສູ້ຮົບມີໄຊລະຫວ່າງສອງປະເທດພວກເຮົາ. ການມີເສັ້ນທາງໂຮ່ຈິມິນ ລຽບສາຍພູຫລວງເບື້ອງຕາເວັນຕົກບົນຜືນແຜ່ນດິນລາວນັບຫລາຍສິບພັນກິໂລແມັດຜ່ານ 5 ແຂວງຫລາຍສິບເມືອງເປັນຮ້ອຍບ້ານແຕ່ພາກກາງໄປຮອດພາກໃຕ້ຂອງລາວ ດ້ວຍການສູນເສຍ; ການເສຍສະຫລະຢ່າງໃຫຍ່ຫລວງຂອງປະຊາຊົນລາວຍ້ອນລູກລະເບີດ, ທາດພິດເຄມີຝຸ່ນເຫລືອງຂອງສັດຕູຖອກເຫລົງເປັນຫລາຍລ້ານໂຕນ. ໄດ້ເປັນສະໜາມຮົບທີ່ດຸເດືອດທີ່ນັກຮົບທັງສອງຊາດລາວ-ຫວຽດນາມ ຮ່ວມສຳພັນກັນສູ້ຮົບບົນຈິດໃຈສາກົນອັນຜ່ອງໃສ ຖານສະຫາຍອ້າຍນ້ອງຢ່າງເດັດດ່ຽວ ໜຽວແໜ້ນ; ຍາດເຫື່ອ ແລະ ນ້ຳຕາ, ຍາດເລືອດ ແລະ ຊີວິດຂອງເຂົາເຈົ້າໄດ້ເຈືອຈານເຂົ້າກັນເພື່ອໄຊຊະນະ ເຊິ່ງປະທານ ໄກສອນ ພົມວິຫານ ໄດ້ສະຫລຸບວ່າ: ເສັ້ນທາງໂຮ່ຈິມິນໄດ້ຊ່ວຍໃຫ້ການປະຕິວັດປົດປ່ອຍພາກໃຕ້ຫວຽດນາມມີເງື່ອນໄຂສະດວກ ມັນກະທົບ ແລະ ສ້າງເງື່ອນໄຂໃຫ້ແກ່ການປະຕິວັດລາວ (ປຶ້ມຕາມຮອຍປະຫວັດສາດສືບສານມູນເຊື້ອບົນເສັ້ນທາງໂຮ່ຈິມິນໃນຜືນແຜ່ນດິນລາວ; ສະບັບພາສາລາວ ໜ້າທີ 163).

ມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານອັນເປັນມູນເຊື້ອສອງພັກສອງລັດ; ປະຊາຊົນສອງຊາດລາວ-ຫວຽດນາມ; ຫວຽດນາມ-ລາວ ເຊິ່ງເປັນຕົວແບບທີ່ຫາໄດ້ຍາກໜຶ່ງດຽວໃນໂລກໝັ້ນຄົງ-ຍືນຍົງ-ຕະຫລອດການະນານ.

# ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານ ຢູ່ກອງບັນຊາການ ເມືອງສາມັກຄີໄຊ



(ສພຂ) ວັນທີ 5 ກໍລະກົດ 2022 ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ (ຄຍປປ) ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ລົງເຄື່ອນໄຫວ ຕິດຕາມກວດກາ ແລະ ເກັບກຳຂໍ້ມູນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ຢູ່ກອງບັນຊາການ ປກສ ເມືອງສາມັກຄີໄຊ, ນຳໂດຍທ່ານ ນາງ ຈັນທະລີ ສີສຸວົງ ປະທານ ຄຍປປ ພ້ອມດ້ວຍຄະນະ ເຂົ້າຮ່ວມມີທ່ານ ພົທ ຕິກຄຳ ນາມແສນວົງ ຮອງຫົວໜ້າກອງບັນຊາການ ປກສ ເມືອງ ຜູ້ຊີ້ນຳວຽກງານສຳມະໂນຄົວ ແລະ ທ່ານ ພົທ ແກ້ວອຸດອນ ວໍລະບຸດ ຮອງຫົວໜ້າກອງບັນຊາການ ປກສ ເມືອງ ຜູ້ຊີ້ນຳວຽກງານຕຳຫລວດ ມີບັນດາຄະນະກອງບັນຊາການ ຕະຫລອດຮອດນາຍ ແລະ ພົນຕຳຫລວດພາຍໃນເມືອງເຂົ້າຮ່ວມ.

ໂອກາດນີ້, ທ່ານ ພົທ ແກ້ວອຸດອນ ວໍລະບຸດ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໃນໄລຍະ 6 ເດືອນຕົ້ນປີ 2022 ຜ່ານມາວ່າ: ວຽກງານສະກັດກັ້ນ ແລະ ຕ້ານຢາເສບຕິດຂອງກອງບັນຊາການ ປກສ ເມືອງ ແມ່ນເປັນວຽກໜຶ່ງທີ່ສຳຄັນ ແລະ ເປັນວຽກງານບູລິມະສິດທີ 1 ໃນການແກ້ໄຂ ໂດຍໄດ້ເຄື່ອນໄຫວຕາມແຜນການແກ້ໄຂວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ເຊິ່ງຜ່ານການຈັດຕັ້ງປະຕິບັດການແກ້ໄຂບັນຫາຄ້າ-ຂາຍຢາເສບຕິດ ຕາມແຜນວາລະແຫ່ງຊາດ ກອງບັນຊາການ ປກສ ເມືອງ ສາມາດຈັດຕັ້ງປະຕິບັດໄດ້ 17 ເລື່ອງ, ກັກຕົວຜູ້ຖືກຫາໄດ້ 21 ຄົນ, ຍິງ 3 ຄົນ, ຍຶດຂອງກາງຢາເສບຕິດປະເພດຢາບ້າ 10,776 ເມັດ, ໂທລະສັບ 16 ໜ່ວຍ, ເງິນສົດ 2,022,00 ກີບ, ສຶກສາອົບຮົມຜູ້ຖືກເຄາະຮ້າຍຈາກຢາເສບຕິດມີ 9 ຄັ້ງ, ລວມ 9 ຄົນ, ວຽກງານຄຸມຂັງ ການເໜັງຕີງຂອງຜູ້ຖືກຫາ ແລະ ຜູ້ຖືກດັດສ້າງ ທັງເມືອງ ແລະ ແຂວງ ມີທັງໝົດ 80 ຄົນ, ຍິງ 7 ຄົນ ໃນນັ້ນ, ໄດ້ປ່ອຍຕົວຍົກຍ້າຍໄປສູນດັດສ້າງ ແລະ ຄ້າຍຄຸມຂັງສະເພົາທອງ ມີທັງໝົດ 66 ຄົນ, ຍິງ 7 ຄົນ, ປັດຈຸບັນຖືກຫາ ແລະ ດັດສ້າງທີ່ຢູ່ໃນຄວາມຮັບຜິດຊອບຂອງຄ້າຍຄຸມຂັງເມືອງມີ 14 ຄົນ, ມີນັກໂທດ 2 ຄົນ, ຜູ້ຖືກຫາ 10 ຄົນ ແລະ ຄອບຄົວຝາກດັດສ້າງມີໃບມອບສິດ 2 ຄົນ.

ຈາກນັ້ນ, ກໍໄດ້ແລກປ່ຽນຄຳຄິດຄຳເຫັນ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ວິທີການ ແລະ ມາດຕະການແກ້ໄຂ ໃນການຈັດຕັ້ງປະຕິບັດວຽກງານຂອງກອງບັນຊາການ ປກສ ເມືອງ ແລະ ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ ຄຍປປ ເພື່ອນຳໄປລາຍງານຂັ້ນເທິງຕາມຂັ້ນຕອນ, ພ້ອມກັນນີ້, ທ່ານ ນາງ ຈັນທະລີ ສີສຸວົງ ຍັງໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ໃນໄລຍະຜ່ານມາ ຄຽງຄູ່ກັນນັ້ນຍັງມີສິ່ງທ້າທາຍຫລາຍຢ່າງຈະຕ້ອງພ້ອມກັນເອົາໃຈໃສ່ເປັນຕົ້ນ ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃຫ້ບັນລຸເກີນຄາດໝາຍທີ່ວາງໄວ້, ຮັກສາສະຖຽນລະພາບກົມກອງ, ກຳແໜ້ນຫລັກການເປົ້າໝາຍ, ແຍກໄດ້ມິດ ແລະ ສັດຕູ ເຄື່ອນໄຫວຖືກຕ້ອງຕາມການມອບໝາຍ, ເອົາໃຈໃສ່ຄຸ້ມຄອງຄົນຕ່າງດ້າວທີ່ດຳລົງຊີວິດໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ເພີ່ມທະວີ ເອົາໃຈໃສ່ວຽກງານປ້ອງກັນຄວາມສະຫງົບ ທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ປັບປຸງ, ກໍ່ສ້າງກຳລັງປ້ອງກັນຄວາມສະຫງົບ ປະຊາຊົນ ໃຫ້ປອດໃສ, ເຂັ້ມແຂງ ແລະ ມີແບບແຜນທີ່ທັນສະໄໝຂຶ້ນຕື່ມ ເພື່ອເຮັດໃຫ້ວຽກງານປ້ອງກັນຄວາມສະຫງົບພາຍໃນເມືອງສາມັກຄີໄຊ ໃຫ້ໄດ້ຮັບການພັດທະນາດີຂຶ້ນເລື້ອຍໆ.

(ວິນັດ)

# ສພຂ ອຸດົມໄຊ ອວຍພອນກຳລັງປ້ອງກັນຄວາມສະຫງົບແຂວງ



(ສພຊ) ເນື່ອງໃນໂອກາດການສະເຫລີມສະຫລອງວັນສ້າງຕັ້ງ ແຂວງອຸດົມໄຊ ຄົບຮອບ 60 ປີ ແລະ ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ແຂວງອຸດົມໄຊ ຄົບຮອບ 60 ປີ, ໃນວັນທີ 13 ກໍລະກົດ 2022 ທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ (ສພຂ) ພ້ອມດ້ວຍບັນດາຄະນະປະຈຳ ສພຂ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຄະນະເລຂາທິການ ສພຂ ແລະ ພະນັກງານພາຍໃນ ສພຂ ໄດ້ເຂົ້າອວຍພອນວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ແຂວງອຸດົມໄຊ ຄົບຮອບ 60 ປີຢູ່ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ໂດຍການຮັບຕ້ອນຂອງທ່ານ ພົອ ສີອອນ ໄຊຍະວົງ ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ມີບັນດາຄະນະພັກ, ຄະນະນຳຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງເຂົ້າຮ່ວມ.

ທ່ານ ຄຳເຜີຍ ງອນວັນຄຳ ກໍໄດ້ມີຄຳເຫັນກ່າວສະແດງຄວາມຍ້ອງຍໍຊົມເຊີຍຕໍ່ ກຳລັງປ້ອງກັນຄວາມສະຫງົບແຂວງອຸດົມໄຊ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ຂອງຕົນໄດ້ດີໂດຍຕະຫລອດມາ, ເຮັດໃຫ້ແຂວງອຸດົມໄຊ ມີຄວາມສະຫງົບໂດຍພື້ນຖານ; ພ້ອມນັ້ນ, ທ່ານ ນາງ ວັນສີ ພວງມະໄລ ເລຂາທິການ ສພຂ ໄດ້ຂຶ້ນກ່າວກອນອວຍພອນວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ແຂວງອຸດົມໄຊ ຄົບຮອບ 60 ປີຕື່ມອີກ.

ຈາກນັ້ນ, ທ່ານ ພົອ ສີອອນ ໄຊຍະວົງ ກໍໄດ້ສະແດງຄວາມຂອບໃຈທ່ານ ຄຳເຜີຍ ງອນວັນຄຳ ພ້ອມດ້ວຍຄະນະ ທີ່ໃຫ້ຄວາມສຳຄັນຕໍ່ວັນດັ່ງກ່າວ, ໄດ້ໃຫ້ການສະໜັບສະໜູນ ແລະ ຮ່ວມມືທາງດ້ານວຽກງານຕ່າງໆມາໂດຍຕະຫລອດ ພ້ອມທັງໃຫ້ຮູ້ວ່າ: ກຳລັງປ້ອງກັນຄວາມສະຫງົບແຂວງອຸດົມໄຊ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 4 ເມສາ 1962 ໂດຍເອີ້ນວ່າ: ກຳລັງປ້ອງກັນສຳນັກງານ ໃນໄລຍະນັ້ນ, ກຳລັງປ້ອງກັນໄດ້ມີການເຄື່ອນໄຫວຕາມພາລະບົດບາດ ແລະ ໄດ້ຮັບການປັບປຸງ, ມີການເຕີບໃຫຍ່ຂະຫຍາຍຕົວຕາມສະພາບການພັດທະນາເສດຖະກິດ-ສັງຄົມ ແລະ ມີຄວາມທັນສະໄໝ ປະກອບສ່ວນເຂົ້າໃນການປະຕິບັດວຽກງານມີຄວາມສະດວກ, ວ່ອງໄວ. ທ່ານຍັງໄດ້ມີຄຳເຫັນຕື່ມວ່າ: ຜ່ານການຈັດຕັ້ງປະຕິບັດວຽກງານທີ່ຜ່ານມາຖ້າຫາກວ່າບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ເຫັນວ່າມີທາງສຽງກ່ຽວກັບບັນຫາໃດ, ວຽກງານໃດໜຶ່ງ ກໍໃຫ້ສົ່ງຂ່າວມາຫາ ເພື່ອຈະແກ້ໄຂວຽກງານດັ່ງກ່າວໃຫ້ດີຂຶ້ນກວ່າເກົ່າ ແລະ ຈະສືບຕໍ່ໃນການຮັກສາມູນເຊື້ອອັນພິລະອາດຫານ, ມູນເຊື້ອດີງາມຂອງກຳລັງປ້ອງກັນຄວາມສະຫງົບແຂວງອຸດົມໄຊ, ສືບຕໍ່ໃນການປົກປັກຮັກສາ ແລະ ສ້າງສາພັດທະນາແຂວງອຸດົມໄຊ ໃຫ້ບັນລຸຜົນສຳເລັດຕາມທິດທາງທາງຄາດໝາຍທີ່ວາງໄວ້.

(ແສງພອນ ອິນນະລົງ)

# ທາບທາມຮ່າງກົດໝາຍວ່າດ້ວຍທະນາຍຄວາມ ຢູ່ ສພຂ ວຽງຈັນ



(ສພຊ) ວັນທີ 6 ກໍລະກົດ 2022 ຄະນະກຳມະການຍຸຕິທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ຈັດກອງປະຊຸມທາບທາມຄຳຄິດ-ຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍທະນາຍຄວາມ (ສະປັບປັບປຸງ) ທີ່ຫ້ອງປະຊຸມ ສພຂ ວຽງຈັນ ໂດຍການເປັນປະທານຂອງ ທ່ານ ທອງສູນ ຊາມູນຕີຣ ຮອງປະທານຄະນະກຳມະການຍຸຕິທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຂົ້າຮ່ວມມີບັນດາສະມາຊິກສະພາປະຊາຊົນແຂວງ (ສສຂ) 4 ເມືອງທີ່ພຽງຄື: ເມືອງໂພນໂຮງ, ເມືອງວຽງຄຳ, ເມືອງແກ້ວອຸດົມ ແລະ ເມືອງ ທຸລະຄົມ ທີ່ສັງກັດຢູ່ໃນຄະນະກຳມະການດັ່ງກ່າວ, ມີຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ວິຊາການທີ່ກ່ຽວຂ້ອງພາຍໃນ ສພຂ.

ຈຸດປະສົງ ກໍເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ) ມີຄວາມລະອຽດຄົບຖ້ວນ ແລະ ສົມບູນກວ່າເກົ່າ ສາມາດພິຈາລະນາຮັບຮອງໃນກອງປະຊຸມຂອງສະພາແຫ່ງຊາດ. ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳຄິດ ຄຳເຫັນໃສ່ບາງມາດຕາເປັນຕົ້ນແມ່ນ ມາດຕາ 21 ວ່າດ້ວຍ: ການເຂົ້າຮ່ວມໃນການດຳເນີນຄະດີ, ມາດຕາ 22 ວ່າດ້ວຍ: ສິດ ແລະ ໜ້າທີ່ຂອງທະນາຍຄວາມໃນການເຂົ້າຮ່ວມການດຳເນີນຄະດີອາຍາ, ມາດຕາ 23 ວ່າດ້ວຍ: ສິດ ແລະ ໜ້າທີ່ຂອງທະນາຍຄວາມໃນການເຂົ້າຮ່ວມການດຳເນີນຄະດີແພ່ງ, ມາດຕາ 31 ວ່າດ້ວຍ: ເງື່ອນໄຂການສ້າງຕັ້ງວິສາຫະກິດກົດໝາຍ, ມາດຕາ 68 ວ່າດ້ວຍ: ຂໍ້ຫ້າມສຳລັບທະນາຍຄວາມ ແລະ ມາດຕາ 72 ວ່າດ້ວຍ: ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ. ພ້ອມນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ມີຄຳເຫັນເຈາະຈີ້ມບາງບັນຫາ ພ້ອມທັງມີການຄົ້ນຄວ້າແລກປ່ຽນປະກອບຄຳຄິດ-ຄຳເຫັນ ຢ່າງກົງໄປກົງມາ ແລະ ມີຈຸດສຸມ, ສຸມໃສ່ບາງມາດຕາທີ່ເຫັນວ່າຍັງບໍ່ສອດຄ່ອງ ເໝາະສົມກັບສະພາບຕົວຈິງ ເພື່ອຈະໄດ້ນຳໄປປັບປຸງໃສ່ບັນດາເນື້ອໃນໃຫ້ຄົບຖ້ວນ, ຮັດກຸມ ແລະ ມີຄວາມສົມບູນ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫ້ມີຄວາມຖືກຕ້ອງສອດຄ່ອງຕາມ ທີ່ກົດໝາຍກຳນົດໄວ້.

(ເພັດສະໝອນ ສຸວັນນະສານ)



# ກຽມຄວາມພ້ອມໃຫ້ແກ່ການເຝິກອົບຮົມ ສ້າງຄວາມເຂັ້ມແຂງໃຫ້ ສສຂ



(ສພຊ) ວັນທີ 12 ກໍລະກົດ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ມີກອງປະຊຸມປຶກສາຫາລືພາຍໃນ ລະຫວ່າງວິທະຍາກອນ ແລະ ກອງເລຂາຊ່ວຍວຽກຂອງກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ສະມາຊິກສະພາປະຊາຊົນແຂວງ (ສສຂ) ໂດຍການເປັນປະທານຂອງທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງ, ຫົວໜ້າຄະນະຮັບຜິດຊອບໂຄງການຊ່ວຍການຊ່ວຍເຫລືອລ້າ, ມີບັນດາທ່ານນັກວິທະຍາກອນ ແລະ ກອງເລຂາຊ່ວຍວຽກເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້, ຈັດຂຶ້ນເພື່ອກວດກາຄືນແຜນສະເໜີການຈັດກິດຈະກຳກອງປະຊຸມເຝິກອົບຮົມສ້າງຄວາມເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ ແລະ ການລົງເຄື່ອນໄຫວຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນງົບປະມານ ແລະ ແຜນພັດ

ອ່ານຕໍ່ໜ້າ 5...

# ຜົນງານການເຄື່ອນໄຫວ ສພຂ ຫົວພັນ ພາຍຫລັງໄດ້ຮັບການເລືອກຕັ້ງ

ທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານ ຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງ ທັງເປັນຮອງປະທານ ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໃຫ້ສຳພາດໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເຊິ່ງທ່ານໄດ້ກ່າວວ່າ: ໂດຍປະຕິບັດຕາມພາລະບົດບາດ, ສິດ, ໜ້າທີ່ ທີ່ໄດ້ກຳນົດໃນກົດໝາຍ. ສະນັ້ນ,ນັບແຕ່ກອງປະຊຸມຄັ້ງປະຖົມມະລືກ ຂອງ ສພຊ ຊຸດທີ IX ເຖິງປັດຈຸບັນ ຄສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໄດ້ສຸມໃສ່ຈັດຕັ້ງເຄື່ອນໄຫວວຽກງານຕາມພາລະບົດບາດ ແລະ ສາມາດຕີລາຄາໄດ້ ຄືດັ່ງນີ້:

**I. ຜົນສຳເລັດ**

1. ດ້ານນິຕິບັນຍັດ

ສົມທົບກັບ ຄະນະປະຈຳສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ເປີດກອງປະຊຸມທາບທາມຮ່າງກົດໝາຍ ໄດ້ທັງໝົດ 30 ສະບັບ; ສ້າງນິຕິກຳໃຕ້ກົດໝາຍທີ່ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ເຊິ່ງປະຈຸບັນນີ້ ກຳລັງຄົ້ນຄວ້າ ຈຳນວນ 1 ສະບັບ ຄື: ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການປະເມີນລາຄາທີ່ດິນຢູ່ແຂວງຫົວພັນ; ພ້ອມນັ້ນ ກໍໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ໃນການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳຕ່າງໆ ໂດຍຕິດພັນກັບການລົງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ.

2. ດ້ານການຕົກລົງບັນຫາສຳຄັນຂອງຊາດ ແລະ ຂ້ອງທ້ອງຖິ່ນ

- ເຂົ້າຮ່ວມກອງປະຊຸມຄັ້ງປະຖົມມະລືກ ຂອງ ສພຊ ຊຸດທີ IX ແລະ ສພຂ ຫົວພັນ ຊຸດທີ II ໃນການຄົ້ນຄ້ວາພິຈາລະນາ ປະກອບຄຳຄິດເຫັນດ້ວຍຄວາມຮັບຜິດຊອບສູງຕໍ່ກັບບັນຫາສຳຄັນຕ່າງໆຂອງຊາດ ແລະ ທ້ອງຖິ່ນ ເປັນຕົ້ນແມ່ນການພິຈາລະນາ ແລະ ຮັບຮອງເອົາກົງຈັກ ແລະ ບຸກຄະລາກອນຂອງ ສພຊ ຊຸດທີ IX, ເລືອກຕັ້ງເອົາປະທານປະເທດ, ຮອງປະທານປະເທດ, ເລືອກຕັ້ງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ, ປະທານອົງການກວດກາແຫ່ງລັດ, ພິຈາລະນາ ແລະ ຮັບຮອງເອົາກົງຈັກ ແລະ ບຸກຄະລາກອນ ຂອງລັດຖະບານ ຊຸດທີ IX; ພິຈາລະນາ ແລະ ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII ແລະ ແຜນງົບປະມານ 5 ປີ (2016-2020) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX, ແຜນງົບປະມານແຫ່ງລັດ 5 ປີ (2021-2025) ; ພິຈາລະນາ ແລະ ຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2016-2020) ແລະ ທິດທາງແຜນການ 5 ປີ (2021-2025), ຂອງອົງການໄອຍາການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ສພຊ ທີ IX; ພິຈາລະນາ ແລະ ຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍໃນ 5 ປີ (2021-2025).

ນອກນັ້ນ, ຍັງໄດ້ພິຈາລະນາ ແລະ ຮັບຮອງເອົາກົງຈັກ ແລະ ບຸກຄະລາກອນຂອງ ສພຂ ຊຸດທີ II, ອົງການປົກຄອງແຂວງ, ເລືອກຕັ້ງຫົວໜ້າອົງການໄອຍະການປະຊາຊົນແຂວງ, ປະທານສານປະຊາຊົນແຂວງ; ພິຈາລະນາ ແລະ ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 5 ປີ (2016-2020) ແລະ ງົບປະມານແຫ່ງລັດ 5 ປີ (2021-2025) ຂອງແຂວງຫົວພັນ; ພິຈາລະນາ ແລະ ຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2016-2020) ແລະ ທິດທາງແຜນການ 5 ປີ (2021-2025), ຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ແຜນການ 5 ປີ (2021-2025) ຂອງສະພາປະຊາຊົນແຂວງຫົວພັນ ຊຸດທີ II.

- ເຂົ້າຮ່ວມກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງ ສພຊ ຊຸດທີ IX ໃນການຄົ້ນຄ້ວາພິຈາລະນາ ປະກອບຄຳຄິດເຫັນໃສ່ສອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ການເງິນ ແລະ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ບັນຫາອື່ນໆ;

- ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ແລະ ສພຂ ປະກອບຄຳຄິດ-ຄຳເຫັນໃສ່ບັນຫາຕ່າງ ຢ່າງສ້າງສັນ ດ້ວຍຄວາມຮັບຜິດຊອບສູງ ເພື່ອພິຈາລະນາຮັບຮອງບັນຫາສຳຄັນຂອງຊາດ ແລະ ທ້ອງຖິ່ນ ເປັນຕົ້ນແມ່ນພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດ



ຖະບານ ກ່ຽວກັບແຜນຍຸດທະສາດການໄຟຟ້າ ຂອງ ສປປລາວ ປີ (2021-2030); ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດ 10 ປີ ແລະ ແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ 5 ປີ (2021-2025); ພ້ອມນັ້ນ, ກໍໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຂອງອົງການກວດສອບປະຈຳພາກເໜືອ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022 ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ເອກະສານລາຍງານການເງິນລັດວິສາຫະກິດນ້ຳປະປາ ປະຈຳປີ 2020 ຂອງອົງການກວດສອບປະຈຳພາກເໜືອ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງການເຄື່ອນໄຫວວຽກງານ ປີ 2021, ທິດທາງແຜນການເຄື່ອນໄຫວວຽກງານ ປີ 2022 ແລະ ການກວດກາຕາມຜົນຂອງການກວດສອບຂອງແຂວງຫົວພັນ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ແຂວງຫົວພັນ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສະພາປະຊາຊົນ ແຂວງຫົວພັນ.

2. ດ້ານຕິດຕາມກວດກາ

- ໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງເປັນປົກກະຕິ ໂດຍຜ່ານຮູບແບບການລາຍງານເປັນລາຍລັກອັກສອນ ແລະ ລົງເບິ່ງພື້ນທີ່ຕົວຈິງ ເປັນຕົ້ນແມ່ນກວດກາຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຊຳ 1A, ນ້ຳຊຳ 3 ທີ່ເມືອງຊຳໃຕ້, ໂຄງການກໍ່ສ້າງສະໜາມບິນໜອງຄ້າງ, ໂຄງການກໍ່ສ້າງເສັ້ນທາງໜອງຄ້າງ-ເມືອງແອດ, ໂຄງການກໍ່ສ້າງຂົວຂ້າມນ້ຳມ່າ ບ້ານຊຽງຄູນ ເມືອງແອດ, ໂຄງການຂຸດຄົ້ນບໍ່ເຫລັກ ຢູ່ເມືອງຫົວເມືອງ, ເມືອງວຽງໄຊ, ເມືອງຮ້ຽມ, ໂຄງການຂຸດຄົ້ນ ແລະ ປຸງແຕ່ງຫີນມາໂບ ຢູ່ເມືອງກວັນ; ລົງຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດ ບັນດາຄາດໝາຍ ຂົງເຂດສຶກສາທິການ ແລະ ກິລາ ແລະ ອື່ນໆ;

- ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຈຳນວນທັງໝົດ 13 ສະບັບ, ມາຮອດປະຈຸບັນນີ້ ໄດ້ຄົ້ນຄວ້າ ແລະ ແກ້ໄຂສຳເລັດ 100%;

- ລົງພົບປະຜູ້ມີສິດເລືອກຕັ້ງ ນຳເອົາຜົນສຳເລັດກອງປະຊຸມ ຄັ້ງປະຖົມມະລືກ, ກອງປະຊຸມສະໄໝສາມັນ ເທື່ອທີ 2, ສະໄໝວິສາມັນ ເທື່ອທີ 1 ຂອງ ສພຊ ຊຸດທີ IX ລົງເຜີຍແຜ່ໃນ 10 ເມືອງ 78 ຈຸດ, ກວມເອົາ 76 ບ້ານ, 10 ເທດສະບານ ແລະ 1 ກອງພັນ ມີຜູ້ເຂົ້າຮ່ວມທັງໝົດ 10,125 ຄົນ ຍິງ 4,466 ຄົນ ແລະ ຍັງໄດ້ລະດົມເຄື່ອງຊ່ວຍເຫລືອ ມອບໃຫ້ອົງການປົກຄອງບ້ານ, ປະຊາຊົນຜູ້ທຸກຍາກ ແລະ ຄອບຄົວທີ່ຖືກຜົນກະທົບຈາກອັກຄີໄພ ລວມເປັນມູນຄ່າທັງໝົດ 65.900.000 ກີບ.

**II. ດ້ານຄົງຄ້າງ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ**

ກ. ດ້ານຄົງຄ້າງ.

ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທາບທາມ ແລະ ປະກອບຄຳເຫັນຕໍ່ຮ່າງກົດໝາຍ ບາງຄັ້ງຍັງເຮັດໄດ້ບໍ່ທັນເລິກເຊິ່ງ ແລະ ກວ້າງຂວາງເທົ່າທີ່ຄວນ;

1) ການເກັບກຳຂໍ້ມູນ ແລະ ບັນຫາທີ່ຈຳເປັນຕ່າງໆ ເພື່ອຊຸກຍູ້ໃຫ້ອົງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຕາມກົດໝາຍ ແລະ ລະບຽບການ ຍັງບໍ່ທັນເຮັດໄດ້ຢ່າງປົກກະຕິ ແລະ ກວ້າງຂວາງ;

2) ການຈັດຕັ້ງປະຕິບັດພາລະບົດບາດ ໃນການຕິດຕາມກວດກາ ຢູ່ພື້ນທີ່ຕົວຈິງ ຍັງເຮັດໄດ້ໜ້ອຍ, ບໍ່ທັນເປັນປົກກະຕິ ແລະ ຕໍ່ເນື່ອງ.

ຂ. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ

1) ຂໍ້ສະດວກ

- ມີລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເປັນບ່ອນອີງໃນການຈັດຕັ້ງປະຕິບັດການເຄື່ອນໄຫວຕາມສິດ, ພາລະບົດບາດ ຂອງຕົນ;

- ໄດ້ຮັບທິດຊີ້ນຳຈາກຄະນະປະຈຳສະພາແຫ່ງຊາດ ຕໍ່ກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະມາຊິກສະພາແຫ່ງຊາດ ເຊິ່ງໄດ້ເອົາໃຈໃສ່ຊຸກຍູ້ນຳພາ-ຊີ້ນຳ ຢ່າງໃກ້ສິດ ສາມາດເຮັດໃຫ້ການເຄື່ອນໄຫວມີຜົນສຳເລັດໃນຫລາຍດ້ານ;

- ຄສຊ ປະຈຳເຂດເລືອກຕັ້ງ ໄດ້ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ, ມີການແບ່ງວຽກ, ແບ່ງຄວາມຮັບຜິດຊອບ ແລະ ມີຄວາມເປັນເອກະພາບກັນແຕ່ຫົວທີ;

- ຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ ແລະ ຂະແໜງການຊ່ວຍວຽກ ສະພາປະຊາຊົນແຂວງ ໄດ້ເປັນເຈົ້າການຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ມີຄວາມຮັບຜິດຊອບສູງ.

ຄ. ຂໍ້ຫຍຸ້ງຍາກ

- ກົນໄກການປະສານງານໃນການຕິດຕາມກວດກາ ບໍ່ທັນຄ່ອງຕົວ, ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ລະຫວ່າງ ຄສຊ ປະຈຳເຂດເລືອກຕັ້ງ ແລະ ສພຂ ບໍ່ທັນກົມກຽວ, ລະອຽດເລິກເຊິ່ງ, ຕິດຕາມກວດກາ ຍັງມີລັກສະນະປົນເປກັນບໍ່ທັນເຮັດໄດ້ເປັນປົກກະຕິ ແລະ ຕໍ່ເນື່ອງ;

- ເນື່ອງຈາກພູມສັນຖານຂອງແຂວງຫົວພັນ ສ່ວນຫລາຍເປັນເຂດພູສູງ ຫ້ວຍເລິກ, ພື້ນຖານໂຄງລ່າງດ້ານເສັ້ນທາງສ່ວນຫລາຍບໍ່ທັນສະດວກ ເຮັດໃຫ້ການເຄື່ອນໄຫວລົງພົບປະຜູ້ມີສິດເລືອກຕັ້ງ ມີຄວາມຫຍຸ້ງຍາກຫລາຍ, ງົບປະມານຈຳກັດ.

**III. ວຽກງານຈຸດສຸມໃນຕໍ່ໜ້າ**

- ສືບຕໍ່ເຂົ້າຮ່ວມກອງປະຊຸມສຳມະນາທາບທາມຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຕ່າງໆ ໃຫ້ລະອຽດ, ເລິກເຊິ່ງ ພ້ອມທັງຊຸກຍູ້ອົງການປົກຄອງແຂວງ ສ້າງນິຕິກຳໃຕ້ກົດໝາຍທີ່ຕິດພັນກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງແຂວງ;

- ນຳເອົາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ປະກາດໃຊ້ແລ້ວ ລົງໂຄສະນາເຜີຍແຜ່ ໂດຍຕິດພັນກັບການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນຂອງ ສພຊ ແລະ ສພຂ ຢູ່ຮາກຖານທ້ອງຖິ່ນ, ເຂດຫ່າງໄກສອກຫລີກໃຫ້ກ້ວາງຂວາງ ແລະ ທົ່ວເຖິງ;

- ເຂົ້າຮ່ວມກອງປະຊຸມສະໄໝສາມັນ ເທື່ອທີ 4-5 ຂອງ ສພຊ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4-5 ຂອງ ສພຂ ຊຸດທີ II ໃນການຄົ້ນຄ້ວາປະກອບຄຳຄິດເຫັນ ເພື່ອພິຈາລະນາຮັບຮອງ ບັນຫາສຳຄັນຂອງຊາດ ແລະ ຂອງທ້ອງຖິ່ນ ດ້ວຍຄວາມຮັບຜິດຊອບສູງ;

- ສືບຕໍ່ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຜນງົບປະມານແຫ່ງລັດ, ບັນດາໂຄງການລົງທຶນຂອງລັດ, ໂຄງການຈັດຕັ້ງປະຕິບັດມີຄວາມຫລ້າຊ້າ ບໍ່ມີປະສິດທິພາບ, ບໍ່ປະຕິບັດຕາມສັນຍາ, ໂຄງການທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ-ສັງຄົມ ແລະ ວຽກງານພັດທະນາຊົນນະບົດລຶບລ້າງຄວາມທຸກຍາກ;

- ສຸມໃສ່ຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ແລະ ການແກ້ໄຂບັນຫາຢາເສບຕິດ;

- ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນຂອງ ສພຊ ແລະ ຂອງ ສພຂ ຊຸດທີ II, ຊຸກຍູ້ ແລະ ຕິດຕາມການຟື້ນຟູຜົນເສຍຫາຍ ທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດ, ປຸກລະດົມການຊ່ວຍເຫລືອດ້ານຕ່າງໆ ເພື່ອນຳໄປຊ່ວຍເຫລືອບັນເທົາທຸກຂັ້ນຕົ້ນໃຫ້ແກ່ປະຊາຊົນຜູ້ປະສົບໄພພິບັດທາງທຳມະຊາດ, ຜູ້ທຸກຍາກຂາດເຂີນ ແລະ ອື່ນໆ;

- ເອົາໃຈໃສ່ຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ, ແຜນການພົວພັນຮ່ວມມືກັບຕ່າງປະເທດ ຂອງ ສພຊ, ຂອງແຂວງ, ເພື່ອເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືນຳບັນດາປະເທດ ແລະ ອົງການຈັດຕັ້ງສາກົນ, ໂດຍສະເພາະແມ່ນບັນດາແຂວງ ສສ ຫວຽດນາມ ທີ່ມີຊາຍແດນຕິດຈອດກັນຄື: ຄສຊ ປະຈຳແຂວງເຊີນລາ, ແຂວງແທັງຮວ່າ ແລະ ແຂວງເງະອານ ຕາມເງື່ອນໄຂຕົວຈິງ;



ຕໍ່ຈາກໜ້າ 4...

ທະນາເສດຖະກິດ-ສັງຄົມ ຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ.

ກອງປະຊຸມໄດ້ຮັບຟັງທ່ານ ນາງ ພອນສະຫວັນ ສັກຕິຄຸນ ລາຍງານແຜນສະເໜີຈັດກິດຈະກຳກອງປະຊຸມເຝິກອົບຮົມສ້າງຄວາມເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ ແລະ ການລົງເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດແຜນງົບປະມານ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ເພື່ອຄວາມເປັນເອກະພາບ ແລະ ຮັບປະກັນໃຫ້ບັນດາໜ້າວຽກໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ໄດ້ກຳນົດ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)



## ສຸກສະບາຍຫາຍໂຣຄາ

# ສັນຍານເຕືອນແມ່ຍິງ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ແມ່ຍິງຫລາຍໆທ່ານ ອາດມີຄວາມວິຕົກກັງວົນ ແລະ ຢ້ານການກວດສຸຂະພາບພາຍໃນ ໂດຍສະເພາະການກວດພະຍາດຍິງ ເພື່ອຊອກຫາພະຍາດ ແລະ ວິທີທາງປ້ອງກັນແຕ່ຫົວທີ ຫລາຍທ່ານເລືອກທີ່ຈະປະຕິເສດການກວດ; ດັ່ງນັ້ນ, ມື້ນີ້ຄໍລຳສຸກສະບາຍຫາຍໂລຄາ ຈຶ່ງຮວບຮວມເອົາ 7 ອາການສຳຄັນ ທີ່ຜູ້ຍິງຄວນຮູ້ ເນື່ອງຈາກມັນເປັນອາການທີ່ບົ່ງບອກວ່າ ຮ່າງກາຍເຖິງເວລາແລ້ວທີ່ຈະຕ້ອງໄດ້ຜ່ານການກວດພາຍໃນ ມານຳສະເໜີໃຫ້ແກ່ທ່ານຜູ້ອ່ານໄດ້ຮັບຊາບ:

**1. ມີເລືອດອອກທາງຊ່ອງຄອດ**

ເມື່ອມີເລືອດອອກຈາກຊ່ອງຄອດໂດຍບໍ່ຮູ້ສາເຫດ ແລະ ໝັ້ນໃຈວ່າເລືອດນັ້ນບໍ່ແມ່ນເລືອດປະຈຳເດືອນ ໂດຍສະເພາະເມື່ອມີເລືອດອອກຫລັງຈາກມີເພດສຳພັນ ລວມທັງການມີເລືອດອອກເລັກໜ້ອຍຫລັງຈາກໝົດປະຈຳເດືອນ ຄວນໄປພົບທ່ານໝໍ ເພື່ອກວດພາຍໃນທັນທີ.

**2. ມີອາການຜິດປົກກະຕິໃນຊ່ອງຄອດ**

ໂດຍປົກກະຕິແລ້ວ ການລົງຂາວຈະມີລັກສະນະໃສ ແລະ ມີສີອອກຂາວໆ ຖ້າມີອາການຜິດປົກກະຕິເຊັ່ນ: ລົງຂາວມີສີເຫລືອງປົນຂຽວ ຫລື ສີເຫລືອງຂຸ້ນ ອາດຈະເກີດຈາກເຊື້ອແບັກທີເລຍ ຖ້າຫາກລົງຂາວເປັນສີນ້ຳຕານ ອາດເກີດຈາກມີເລືອດອອກທາງຊ່ອງຄອດ.

**3. ປະຈຳເດືອນບໍ່ມາ**

ຫາກປະຈຳເດືອນຂາດໄປເປັນເວລາຫລາຍເດືອນ ຫລື ບໍ່ມາຕາມປົກກະຕິ ນັ້ນຖືວ່າເປັນສັນຍານເຕືອນໃຫ້ຜູ້ຍິງຄວນໄປກວດສຸຂະພາບພາຍໃນເພດຍິງເຊັ່ນດຽວກັນ.

**4. ຊ່ອງຄອດມີກິ່ນ**

ຖ້າຊ່ອງຄອດມີກິ່ນເໝັນ ເຊິ່ງອາດຈະບໍ່ເຄີຍເປັນມາກ່ອນ ເຊິ່ງກິ່ນເໝັນຈະຄ່ອຍໆຮຸນແຮງຂຶ້ນ ທ່ານຄວນກວດເບິ່ງພາຍໃນທັນທີ ໂດຍສ່ວນໃຫຍ່ແລ້ວກິ່ນທີ່ພົບຈະມີ 3 ປະເພດຄື: ກິ່ນຄາວ, ກິ່ນສົ້ມ ແລະ ມີກິ່ນອັບຊື້ນ.

**5. ເຈັບທ້ອງນ້ອຍຊ້ຳເຮື້ອ**

ເມື່ອມີອາການເຈັບທ້ອງແລະປວດຢ່າງຕໍ່ເນື່ອງ ຢູ່ບໍລິເວນທ້ອງນ້ອຍຕະຫລອດເວລາ ບໍ່ວ່າຈະເປັນປະຈຳເດືອນຫລືບໍ່ ແລະ ມີອາການຮຸນແຮງຂຶ້ນເລື້ອຍໆ ຄວນໄປກວດພາຍໃນທັນທີເພື່ອໃຫ້ທ່ານໝໍສາມາດກວດຫາສາເຫດຂອງອາການ ແລະ ຮັບການປິ່ນປົວໂດຍດ່ວນ.

**6. ມີບາດແຜບໍລິເວນຊ່ອງຄອດ**

ບາດແຜທີ່ເກີດບໍລິເວນຊ່ອງຄອດນັ້ນ ອາດເກີດຈາກຫລາຍສາເຫດທີ່ແຕກຕ່າງກັນ ບໍ່ວ່າຈະເປັນບາດແຜບວມ ຫລື ເປັນຮອຍແປ້ວ ເຊິ່ງເກີດຈາກການອັກເສບ, ຕິດເຊື້ອຈາກການສຽດສີໃນເວລາມີເພດສຳພັນ ແລະ ເກີດຈາກຮອຍພະຍາດທີ່ມາຈາກການມີເພດສຳພັນ ໃນເບື້ອງຕົ້ນສາມາດສັງເກດບາດແຜຕົວເອງຜ່ານແວ່ນໄດ້ ຖ້າສັງເກດເຫັນມີບາດແຜຫລາຍຈຸດ ລວມທັງການອັກເສບ, ໃຄ່ບວມ, ແດງ ແລະ ຮູ້ສຶກແສບຮ້ອນໃນຊ່ອງຄອດ ຄວນໄປຫາໝໍໄວເທົ່າທີ່ຈະໄວໄດ້.

**7. ພົບກ້ອນຢູ່ບໍລິເວນທ້ອງນ້ອຍ**

ທ່ານສາມາດສັງເກດໄດ້ດ້ວຍຕົວມັນເອງ ໂດຍການນອນລົງແລ້ວສັງເກດເບິ່ງວ່າທ້ອງໃຫຍ່ຂຶ້ນບໍ? ຖ້າໃຫຍ່ຂຶ້ນ ໃຫ້ລອງຄຳເບິ່ງ ຫາກຮູ້ສຶກວ່າມີກ້ອນມົນໆ, ແຂງໆ ແລະ ດູນຂຶ້ນມາ ທ່ານຄວນໄປກວດພາຍໃນໄວເທົ່າທີ່ຈະໄວໄດ້ ເພື່ອໃຫ້ທ່ານໝໍບົ່ງມະຕິຕື່ມ.

ຢ່າລືມວ່າການກວດສຸຂະພາບ ແມ່ນມີຄວາມສຳຄັນຫລາຍຕໍ່ສຸຂະພາບຂອງແມ່ຍິງ ບໍ່ຕ້ອງອາຍ ແລະ ບໍ່ຕ້ອງຢ້ານເຈັບ ເມື່ອເຖິງກຳນົດເວລາກວດ ແນະນຳໃຫ້ໄປກວດເພື່ອຮູ້ວ່າສຸຂະພາບເຮົາມີຄວາມຜິດປົກກະຕິ ຫລືບໍ່ ລວມທັງການສັງເກດອາການຂ້າງເທິງນີ້ ກໍມີຄວາມສຳຄັນເຊັ່ນກັນ.

## ສາລາກະວີ

# ດັ່ງດວງຈຳປາ

(ມອບແດ່ວັນສ້າງຕັ້ງສະຫະພັນແມ່ຍິງລາວ
ຄົບຮອບ 67 ປີ 20 ກໍລະກົດ 1955-20 ກໍລະກົດ 2022)

**# ໂດຍ: ແກ້ວຕາວັນ ທຳມະວົງ**

❊ ຈຳປາຢືນຢູ່ຢັ້ງ — ມາແຕ່ບູຮານ
ຜ່ານຫ່າຝົນໂຮຍຮຳ — ແດດເຜົາຜານໄໝ້
ຈຳປາຍັງທົນໄດ້ — ໃບຂຽວງອຍງ່າ
ຕະການຕາເອກອ້າງ — ກາງອ້າອາບສຸລີ

❊ ສະຕຣີລາວປຸນປຽບດ້ວຍ — ດວງດອກຈຳປາ
ການເວລາລາໄລ — ຜ່ານໄປຫລາຍມື້
ຍັງຊື່ຕົງຍືນໝັ້ນ — ທົນທານມິໄຫວຫວັ່ນ
ໃຈບໍ່ຜັນປ່ຽນປີ້ນ — ຫັນໜ້າໜ່າຍໜີ

❊ ຫລາຍພັນປີທີ່ເຈົ້າ — ຂົມຂື່ນຢືນທົນ
ຖືກຜູ້ຄົນເຂົາຖື — ດັ່ງດຽວຂອງຫລິ້ນ
ສິ້ນຄ່າຄູນຄວນໄດ້ — ຄືຊາຍທຽມເທົ່າ
ເຈົ້າກໍຍັງຢູ່ໄດ້ — ໃຈສູ້ບໍ່ຖອຍ

❊ ບັດນີ້ສະຕຣີລາວທົ່ວໜ້າ — ມີສິດເທົ່າທຽມຊາຍ
ຢູ່ໃນຫລາຍອົງກອນ — ບ່ອນໃດມີໜ້າ
ໜັກໜາຍິງລາວສູ້ — ຮຽງຊາຍຄຽງຄູ່
ບໍ່ໄດ້ແນມສ່ອງລ້ຳ ນອນເອົາຂາກ່າຍຫ້າງ — ຫລືເສີຍນິ້ງເບິ່ງດາຍ

❊ 20 ກໍລະກົດ ຍ່າງຍ້າຍ — ຫຍັບມໍ່ວຽນມາ
ຂໍສິ່ງພອນໄຊເຖິງ — ແມ່ຍິງລາວທົ່ວໜ້າ
ຢ່າໄດ້ໝອງໝາງເສົ້າ — ຜິວພັນເຫລືອງຫລ່າ
ໃຫ້ຍືນງາມຢູ່ໝັ້ນ ດັ່ງຈຳປາກີບອ້າ — ຕະການເອ້ຊາດລາວ ນັ້ນທ້ອນ!



## ທັກທາຍ ລະບາຍ

**# ສາວຈົ້ມ**

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

❊ **ຊົມ**ເຊີຍວັນສ້າງຕັ້ງສະຫະພັນແມ່ຍິງລາວ ທີ່ໃກ້ຈະໝູນວຽນມາບັນຈົບຄົບຮອບ **67 ປີ** ໃນວັນທີ **20 ກໍລະກົດ** ທີ່ຈະເຖິງນີ້ ບັດນີ້ຍິງລາວກ້າວ ທຽບເທົ່າທັນຊາຍ ການງານມອບໝາຍ ດັ່ງດຽວສະເໜີດ້ານ ທັງວັດທະນະທຳພ້ອມ ຍິງ-ຊາຍຄຽງຄູ່ ທັງຄູ່ຊູຊ່ອຍຊອ້ານ ຄອບຄົວໜັ້ນທ່ຽງສະເໜີ **ນັ້ນແລ້ວ!**

❊ **ດ່ານສາກົນ**ຮ່ອມມິດຕະພາບ **II (ສະຫວັນນະເຂດ-ມຸກດາຫານ)** ທົດລອງເກັບຄ່າບໍລິການຜ່ານລະບົບທະນາຄານພັດທະນາລາວຈຳກັດ ເພື່ອອຳນວຍຄວາມສະດວກແກ່ຜູ້ໃຊ້ບໍລິການ**ເຂົ້າ-ອອກ** ໂດຍສະເພາະແມ່ນລະບົບການຈັດເກັບລາຍຮັບແບບລ່ອງໄວ-ໂປ່ງໃສ ແລະ **ກວດສອບຄືນໄດ້** ພ້ອມທັງຮັບປະກັນຄວາມປອດໄພ ຊຶ່ງໃຫ້ແຜນວຽກນີ້ ສຳເລັດດັ່ງຄາດຫວັງໝາຍ ເກັບລາຍຮັບແບບລວມສູນ ບ່ອນດຽວພົກຄາງໄວ້ ຊຶ່ງໃຫ້ຈິງຈັງຕັ້ງ ປະຕິບັດຂະຫຍາຍທົ່ວ ດ່ານສາກົນໃຫຍ່ນ້ອຍ ຄົງດີແທ້ແນ່ນອນ **ທ່ານເອີຍ!**

❊ **ຖາມ**ຂ່າວເບື້ອງ ກຳຝ່າຍ **ສພຊ** ທັງ **18 ແຂວງ**ເປັນແນວໃດບໍ່ ການກະກຽມກອງປະຊຸມສະໄໝສາມັນ**ເທື່ອທີ 3** ຂອງສະພາປະຊາຊົນແຂວງໃນທົ່ວປະເທດ ມີເຫດການໃດຕື່ນເຕັ້ນຍໍ່ຍື່ນມາຫາ **ກົມສື່ມວນຊົນຂອງສະພາ** ເປີດເຜີຍຂໍ້ມູນອ້າງແນ່ເດີ ພໍຊິໄດ້ນຳສະເໜີໃຫ້ ປວງຊົນໄດ້ອ່ານ ເຫັນຜົນງານເອກອ້າງ ແຜນການວາງຕໍ່ໜ້າ ປະຊາໄດ້ຊື່ນຊົມ **ທ່ານເອີຍ!**

## ຊວນຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ສ່າບ່ອ່າ**

ຊາຍໜຸ່ມຄົນໜຶ່ງຕາຍຍ້ອນເສບຢາເສບຕິດເກີນຂະໜາດ ຫລັງຈາກ ຕາຍໄປຈຶ່ງຕົກໝໍ້ນາຮົກ ແລະໄດ້ພໍ່ຈ່າຍົມພິບານຈຶ່ງຖາມວ່າ

- **ຊາຍໜຸ່ມ:** ມີກັນຊາບໍ່ທ່ານ? (ຈ່າຍົມພິບານເອົາຊາໃຫ້ກຳໜຶ່ງ)
- **ຊາຍໜຸ່ມ:** ມີເຈ້ຍຮ່າຊາບໍ່? (ຈ່າຍົມພິບານ ເອົາເຈ້ຍໃຫ້ຕັບບັກໃຫຍ່)
- **ຊາຍໜຸ່ມ:** ມີກັບໄຟບໍ່ທ່ານ ?
- **ຍົມພິບານ:** ເສຍໃຈຢູ່ນີ້ບໍ່ມີກັບໄຟ ມີແຕ່ໄຟຢູ່ກົ້ນໝໍ້ນາຮົກ
- **ຊາຍໜຸ່ມ:** ສ່າບ່ອ່າ



## ຄະຕິເຕືອນໃຈ

**# ດອກຂະຍອມ**

ຮັກເມຍໃຫ້ໜັ່ນບອ່າ
ຢາກເຫັນຮ່າໃຫ້ໜັ່ນປ້ອຍໜັ່ນເອບ

## ສະຫະພັນ...

ລາວບັນດາເຜົ່າ ໃຫ້ແມ່ຍິງໄດ້ຮັບການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ແລະ ຖືແມ່ຍິງເປັນພາກສ່ວນໜຶ່ງໃນກຳລັງແຮງປະກອບສ່ວນໃນວຽກງານສຳຄັນຂອງພັກ ແລະ ລັດ ເປັນຕົ້ນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ກໍຄືການສ້າງສາ ແລະ ພັດທະນາປະເທດຊາດ.

ແມ່ຍິງລາວບັນດາເຜົ່າ ເວົ້າລວມ, ເວົ້າສະເພາະ ຂ້າພະເຈົ້າເອງ ແມ່ນມີຄວາມຮູ້ບຸນຄຸນຢ່າງລົ້ນເຫລືອ ທີ່ພັກໄດ້ມີການຊີ້ນຳ-ນຳພາ ໃຫ້ແມ່ຍິງລາວພວກເຮົາ ໄດ້ມີສອງວັນປະຫວັດສາດຂອງຕົນນັ້ນກໍຄື: ວັນທີ 8 ມີນາ ວັນແມ່ຍິງສາກົນ ແລະ ວັນທີ 20 ກໍລະກົດ ເຊິ່ງເປັນວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ. ໃນຕະຫລອດໄລຍະ 67 ປີຜ່ານມາ, ພັກ ແລະ ລັດ ໄດ້ເອົາໃຈໃສ່ສ້າງເງື່ອນໄຂ ແລະ ຈັດຕັ້ງການສະເຫລີມສະຫລອງ, ສ້າງກິດຈະກຳຕ່າງໆ ເພື່ອປູກຈິດສຳນຶກໃນສອງວັນປະຫວັດສາດດັ່ງກ່າວ ເປັນຂະບວນການຝຶກຝົນໃນທົ່ວປະເທດ.

ເນື່ອງໃນໂອກາດຂ່ຳບັບຮັບຕ້ອນ ແລະ ສະເຫລີມສະຫລອງວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ ວັນທີ 20 ກໍລະກົດ ຄົບຮອບ 67 ປີ ໃນປີນີ້ ສູນກາງສະຫະພັນແມ່ຍິງລາວ ກໍໄດ້ມີການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ VIII ກໍຄືມະຕິກອງປະຊຸມວິສາມັນຄົບຄະນະບໍລິ ຫານງານສູນກາງສະຫະພັນແມ່ຍິງລາວ ຄັ້ງທີ VIII, ແຜນດຳເນີນງານຂອງຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ໄລຍະ 2021-2025 ເຂົ້າສູ່ການຈັດຕັ້ງປະຕິບັດຢ່າງມີຈຸດສຸມ. ໄປຄຽງຄູ່ກັບຜົນສຳເລັດຂອງສູນກາງສະຫະພັນແມ່ຍິງນັ້ນ ສະຫະພັນແມ່ຍິງສະພາແຫ່ງຊາດ ໃນໜຶ່ງປີຜ່ານມາ ກໍໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ VIII, ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກສະພາແຫ່ງຊາດ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງສະຫະພັນແມ່ຍິງສະພາແຫ່ງຊາດ ກໍຄືການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງສູນກາງສະຫະພັນແມ່ຍິງລາວ ຕິດພັນກັບການປະຕິບັດຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ແລະ ປະຕິບັດຄຳຂວັນວັນແມ່ຍິງລາວ ປີ 2022 “ພັດທະນາຄວາມສະເໝີພາບຍິງ-ຊາຍຕິດພັນກັບການພັດທະນາປະເທດຊາດ” ເຊິ່ງມີຜົນສຳເລັດພົ້ນເດັ່ນໃນຫລາຍດ້ານ ຄື:

ການນຳພາດ້ານການເມືອງ-ແນວຄິດ: ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກສະຫະພັນແມ່ຍິງດ້ວຍຫລາຍຮູບການທີ່ສອດຄ່ອງກັບຈຸດພິເສດຂອງສະພາແຫ່ງຊາດ ໄດ້ຈັດຕັ້ງ ແລະ ຊຸກຍູ້ສະມາຊິກສະຫະພັນແມ່ຍິງເຂົ້າຮ່ວມເຊື່ອມຊຶມແນວທາງ, ນະໂຍບາຍ ແລະ ມະຕິ, ຄຳສັ່ງ, ຄຳແນະນຳຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກສະພາແຫ່ງຊາດ, ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ VIII ກໍຄືມະຕິກອງປະຊຸມວິສາມັນຄົບຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ຄັ້ງທີ VIII ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງສະຫະພັນແມ່ຍິງສະພາແຫ່ງຊາດ, ເຊື່ອມຊຶມມູນເຊື້ອປະຫວັດສາດສຳຄັນຂອງພັກ, ຂອງຊາດ, ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງບັນດາເຜົ່າ, ຮີດຄອງປະເພນີອັນດີງາມຂອງຊາດ, ຊຸກຍູ້ສະມາຊິກແມ່ຍິງຮໍ່າຮຽນເອົາຄຸນສົມບັດສິນທຳປະຕິວັດອັນດີງາມຂອງພະນັກງານປະຕິວັດອາວຸໂສ, ເປັນເຈົ້າການປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ກົດລະບຽບຂອງສະຫະພັນແມ່ຍິງລາວຢ່າງເຂັ້ມງວດ.

ຜ່ານການສຶກສາອົບຮົມການເມືອງ-ແນວຄິດ ເຮັດໃຫ້ສະມາຊິກສະຫະພັນແມ່ຍິງ ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີຄວາມເປັນເອກະພາບສູງຕໍ່ແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫລັກການຂອງພັກຮູ້ ຈຳແນກມິດສັດຕູໄດ້ຢ່າງຈະແຈ້ງ ແລະ ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນ, ມີຄວາມສາມັກຄີຮັກແພງ, ມີຄວາມຮັບຜິດຊອບ ແລະ ເຮັດສຳເລັດໜ້າທີ່ການເມືອງທີ່ການຈັດຕັ້ງມອບໝາຍໄດ້ເປັນຢ່າງດີ; ເອົາໃຈໃສ່ການນຳພາດ້ານການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ ເພື່ອໃຫ້ສອດຄ່ອງກັບກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ຊຸດທີ IX ແລະ ມີການເຄື່ອນໄຫວທີ່ຄ່ອງຕົວ ແລະ ມີຄຸນນະພາບ; ພິເສດ, ສະຫະພັນແມ່ຍິງ ໄດ້ຮ່ວມກັບຄອບຄົວຄະນະປະຈຳສະພາແຫ່ງຊາດ ສ້າງຕັ້ງກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ ແລະ ໄດ້ແຕ່ງຕັ້ງກອງເລຂາຊ່ວຍວຽກ ພ້ອມທັງຄົ້ນຄວ້າສ້າງລະບຽບການຄຸ້ມຄອງການເຄື່ອນໄຫວຂອງກອງທຶນດັ່ງກ່າວ.

ພ້ອມນັ້ນ, ກໍໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຕິດພັນກັບຂະບວນການຮັກຊາດພັດທະນາ ແລະ ຕັ້ງໜ້າປະຕິບັດວຽກງານວິຊາສະເພາະຂອງຕົນ ເຊິ່ງສາມາດຍາດໄດ້ຜົນງານພົ້ນເດັ່ນໃນຫລາຍດ້ານ, ໄດ້ຮັບການຍ້ອງຍໍ, ຊົມເຊີຍ ຈາກຄະນະພັກ, ຄະນະປະຈຳສະພາແຫ່ງຊາດ, ອັນທີ່ພົ້ນເດັ່ນ: ສະຫະພັນແມ່ຍິງສະພາແຫ່ງຊາດ ໄດ້ຮັບທຸງໄຊ 3 ດີ, ກົມກອງລວມໝູ່ດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ມີ 12 ໜ່ວຍຮາກຖານ ແລະ ໄດ້ຮັບຊົມເຊີຍ ມີ 4 ໜ່ວຍຮາກຖານ; ມີສະມາຊິກແມ່ຍິງໄດ້ຮັບໃບຍ້ອງຍໍບຸກຄົນ 3 ດີ ມີຈຳນວນ 93 ສະຫາຍ, ໄດ້ຮັບໃບຊົມເຊີຍ 68 ສະຫາຍ.

ສຳລັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງສະມາຊິກສະຫະພັນແມ່ຍິງ ໄດ້ເຂົ້າຮ່ວມຄົ້ນຄວ້າທາບທາມເປົ້າໝາຍເຂົ້າສະໝັກໃນຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ສະໄໝທີ VIII, ຄະນະພັກສະພາແຫ່ງຊາດ ສະໄໝທີ IV ແລະ ຄະນະໜ່ວຍພັກຮາກຖານສະພາແຫ່ງຊາດ, ເຂົ້າຮ່ວມຄົ້ນຄວ້າພະນັກງານນຳພາ-ຄຸ້ມຄອງຕຳແໜ່ງບໍລິຫານປະເພດຕ່າງໆຂອງສະພາແຫ່ງຊາດ, ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ມະຫາຊົນກ້າວໜ້າ ທີ່ສະເໜີເຂົ້າເປັນສະມາຊິກພັກ ຫລື ອົງການຈັດຕັ້ງມະຫາຊົນອື່ນ; ເປັນເຈົ້າການປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ ໂດຍສະເພາະການປະຕິບັດນະໂຍບາຍຕໍ່ພະນັກງານເພດຍິງໃນເວລາເຈັບເປັນ, ເກີດລູກ ແລະ ນະໂຍບາຍອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ທ່ານໄດ້ກ່າວຕື່ມອີກວ່າ: ສຳລັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງລາວ ແມ່ນໄດ້ເອົາໃຈໃສ່ໃນການຊີ້ນຳ-ນຳພາ, ສຶກສາອົບຮົມ, ເຜີຍແຜ່ເອກະສານຄຳແນະນຳ ແລະ ແຜນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ໃຫ້ຄະນະໜ່ວຍຮາກຖານ ແລະ ສະມາຊິກສະຫະພັນແມ່ຍິງ ໃຫ້ຮັບຮູ້, ເຊື່ອມຊຶມ, ເຂົ້າໃຈ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດຄຳຂວັນ ແລະ ຂໍ້ແຂ່ງຂັນ 3 ດີ ໂດຍຖືເອົາຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ແລະ ຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ເຊິ່ງຜ່ານການສະຫລຸບຕີລາຄາຂະບວນການແຂ່ງຂັນ 3 ດີ ໃນປີ 2021 ສະມາຊິກສະຫະພັນແມ່ຍິງເຂົ້າຮ່ວມແຂ່ງຂັນ ຈຳນວນ 164 ສະຫາຍ, ສາມາດເລືອກໄດ້ສະມາຊິກສະຫະພັນແມ່ຍິງເປັນບຸກຄົນ 3 ດີ ປະເພດ I ໄດ້ 146 ສະຫາຍ; ບຸກຄົນ 3 ດີ ປະເພດ II ໄດ້ 8 ສະຫາຍ; ດ້ານວຽກງານຂະບວນການ ໄດ້ນຳພາ ແລະ ເຂົ້າຮ່ວມສ້າງຂະບວນການໃນວັນສຳຄັນຕ່າງໆດ້ວຍຫລາຍຮູບການ ເປັນຕົ້ນຈັດຕັ້ງການໄປມອບເຄື່ອງຊ່ວຍເຫລືອໃຫ້ຄົນພິການ, ເຂົ້າຮ່ວມໄປມອບເຄື່ອງອຸປະໂພກ-ບໍລິໂພກຊ່ວຍເຫລືອສູນກັກກັນ ແລະ ຈຳກັດບໍລິເວນພະຍາດໂຄວິດ-19, ຊ່ວຍທະຫານຊາຍແດນ, ໂຮງໝໍສູນກາງ ແລະ ໂຮງໝໍພາກສະໜາມ ແລະ ບັນດາແຂວງຕ່າງໆ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ 19 ແລະ ໄພທຳມະຊາດ.

ໃນຕອນທ້າຍ, ທ່ານຍັງໄດ້ໃຫ້ຮູ້ກ່ຽວກັບວຽກງານຈຸດສຸມ ປີ 2022 ວ່າ: ເພື່ອສືບຕໍ່ສິ່ງເສີມຈຸດດີ ແລະ ບຸກບືນໃຫ້ມີການຫັນປ່ຽນທີ່ຕັ້ງໜ້າ ທັງເປັນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກສະພາແຫ່ງຊາດ, ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ຮັບປະກັນໃຫ້ແກ່ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະຫະພັນແມ່ຍິງ ໃຫ້ມີການເຄື່ອນໄຫວຢ່າງມີຈຸດສຸມ ຈຶ່ງໄດ້ກຳນົດທິດທາງແຜນການເຄື່ອນໄຫວໃນປີ 2022 ດັ່ງນີ້:

1. ສືບຕໍ່ສຶກສາອົບຮົມການເມືອງແນວຄິດ ໃຫ້ສະມາຊິກແມ່ຍິງມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ , ມີນໍ້າໃຈເສຍສະຫລະ, ມີແບບແຜນດຳລົງຊີວິດປອດໃສຂາວສະອາດ, ບຸກບືນພັດທະນາຕົນເອງ;

2. ຈັດຕັ້ງການເຊື່ອມຊຶມ, ເຜີຍແຜ່ແນວທາງນະໂຍບາຍ, ຄຳສັ່ງ, ມະຕິຂອງພັກ, ຂອງຄະນະບໍລິຫານງານພັກສະພາແຫ່ງຊາດ, ມະຕິກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດ ແລະ ມະຕິກອງປະຊຸມ ຄົບຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ແລະ ລະບຽບການຂອງສູນກາງສະຫະພັນແມ່ຍິງລາວ; ເຜີຍແຜ່ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດຄຳຂວັນຂໍ້ແຂ່ງຂັນ 3 ດີ ໃຫ້ແກ່ສະມາຊິກສະຫະພັນແມ່ຍິງ ໃຫ້ຮັບຮູ້, ເຂົ້າໃຈ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດກັບຂະບວນການຮັກຊາດ ແລະ ພັດທະນາ ພ້ອມທັງສະຫລຸບປະເມີນການປະຕິບັດຂໍ້ແຂ່ງຂັນ 3 ດີ ໃນແຕ່ລະໄລຍະໃຫ້ຖືກຕ້ອງກັບຕົວຈິງ;

3. ເອົາໃຈໃສ່ເກັບກຳຂໍ້ມູນ, ຜົນງານການເຄື່ອນໄຫວຂອງສະມາຊິກສະຫະພັນແມ່ຍິງ ເພື່ອນຳສະເໜີຕໍ່ຄະນະພັກໃນການປະຕິບັດນະໂຍບາຍຍ້ອງຍໍສັນລະເສີນຢ່າງເໝາະສົມ, ສືບຕໍ່ປະຕິບັດນະໂຍບາຍ ໃຫ້ສະມາຊິກແມ່ຍິງຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງໃນເວລາທີ່ມີຄວາມຫຍຸ້ງຍາກ, ເຈັບເປັນ, ເກີດລູກ, ເສຍຊີວິດ ແລະ ອື່ນໆ;

4. ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີເອື້ອຍນ້ອງແມ່ຍິງ ໃຫ້ມີຄວາມໜັກແໜ້ນ, ມີຈິດໃຈຊ່ວຍເຫລືອເຜື່ອແຜ່ ເຊິ່ງກັນແລະກັນ;

5. ສືບຕໍ່ສ້າງຂະບວນການຕ່າງໆໃຫ້ມີເນື້ອໃນໜັກແໜ້ນເປັນຂະບວນ ເຂົ້າຮ່ວມເຄື່ອນໄຫວກັບຄະນະກອງທຶນຊ່ວຍ ເຫລືອສັງຄົມຂອງສະພາແຫ່ງຊາດ, ເຂົ້າຮ່ວມເຄື່ອນໄຫວຂະບວນການຕ່າງໆກັບຄະນະພັກ, ອົງການຈັດຕັ້ງມະຫາຊົນທີ່ເປັນພາຄີ ແລະ ສູນກາງສະຫະພັນແມ່ຍິງລາວຈັດຂຶ້ນ, ຊຸກຍູ້ໜ່ວຍຮາກຖານສ້າງຕັ້ງຄັງສະສົມຕົນ ເພື່ອຊ່ວຍສະມາຊິກພາຍໃນໜ່ວຍ.

ໃນໂອກາດວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ ທ່ານຍັງໄດ້ອວຍໄຊໃຫ້ພອນໃຫ້ແກ່ບັນດາທ່ານການນຳພັກ-ລັດທີ່ເປັນເພດຍິງ ຂອງສະພາແຫ່ງຊາດ ແລະ ສະມາຊິກແມ່ຍິງທົ່ວສະພາແຫ່ງຊາດ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ ຈົ່ງມີສຸຂະພາບເຂັ້ມແຂງ ມີພາລະນາໄມສົມບູນ, ສືບຕໍ່ປະຕິບັດສອງໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ສ້າງສາປະເທດຊາດ ມີຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດຂອງຕົນ.






## ທຳມະສຳລັບນັກບໍລິຫານ

ໂດຍ: ດົ້ນກົບເມກ

ຄົນລາວເຮົາມີພາສິດເຕືອນຄົນທີ່ມີອຳນາດວາດສະໜາບໍ່ໃຫ້ຫລົງໂຕເອງວ່າ: ເຫັນວ່າໄດ້ຂີ່ຊ້າງກັ້ງຮົ່ມເປັນພະຍາ ຢ່າໄດ້ລືມຊາວນາຜູ້ຂີ່ຄວາຍຄອນກ້າ; ຜູ້ນຳ ຫລື ຜູ້ບໍລິຫານ ຄືນັກປະຍຸກຄວາມຮູ້ຫລາຍສາຂາເປັນເຄື່ອງມືໃນການບໍລິຫານຄົນ-ບໍລິຫານງານ ເພື່ອໃຫ້ສຳເລັດຕາມແຜນທີ່ວາງໄວ້; ຖ້າວ່າຜູ້ບໍລິຫານຫາກຂາດສະຕິປັນຍາ ບໍ່ສາມາດສອດສ່ອງເບິ່ງວຽກ-ຄົນທີ່ຕົນເອງບັງຄັບບັນຊາກໍອາດເຮັດໃຫ້ແຜນວຽກລົ້ມເຫລວໄດ້.

ຄຸນນະທຳໂຕທີ່ໜຶ່ງ ທີ່ຜູ້ບໍລິຫານຕ້ອງມີຄື:

1. ປັນຍາ: ປັນຍາຄືຮູ້ບົດບາດ-ໜ້າທີ່ ແລະ ຮູ້ວາງຕຳແໜ່ງຄົນໃຫ້ຖືກກັບຄວາມຮູ້ຄວາມສາມາດຂອງເຂົາ, ຫລີກເວັ້ນການແຕ່ງຕັ້ງຄົນບໍ່ຖະໜັດວຽກໄປຮັບຜິດຊອບວຽກງານທີ່ເຂົາບໍ່ຮູ້-ຂາດຄວາມສາມາດ;

2. ຄຸນນະທຳ ຂໍ້ນີ້ ກໍຄື ວິຣິຍະ ແປວ່າ: ຄວາມກ້າຫານໃນການຕັດສິນໃຈ ຊີ້ນຳ-ສັ່ງວຽກງານ ເພື່ອໃຫ້ບັນລຸຕາມແຜນ, ກ້າຮັບຜິດຊອບ;

3. ຄຸນນະທຳແຫ່ງຄວາມປອດໃສ (ອະນະວັດຊະ) ໝາຍຄວາມວ່າປະຕິບັດໜ້າທີ່ບໍ່ເຫັນແກ່ປະໂຫຍດຕົນພາໃຫ້ສໍ້ໂກງສ່ວນລວມ ຖ້າວ່າຜູ້ບໍລິຫານຄົນໃດຫາກມີໜ້າທີ່ວຽກງານທີ່ຂາດຄວາມບໍລິສຸດ ເຖິງເກັ່ງແຕ່ຂາດຄວາມດີກໍບໍ່ສາມາດບັນລຸເປົ້າໝາຍໄດ້;

4. ສະມະນະປັດຕະຕາ ແປວ່າ: ວາງຕົນໃຫ້ພໍດີ (ເໝາະສົມ) ບໍ່ແມ່ນເປັນຫົວໜ້າແບບໂຕອື່ງ ອວດເບັ່ງ-ວາງມາດໃຫຍ່.

ຜູ້ຂຽນໄດ້ຍິນໝູ່ເລົ່າສູ່ຟັງວ່າ: ມີພະນັກງານບໍລິຫານທ່ານໜຶ່ງເຈົ້າກີ້ເຈົ້າການ, ໃນຫ້ອງເຮັດວຽກຕ້ອງມີເລຂາແບບວ່າຫລົງໂຕເອງ ເຂົ້າທຳນອງຖືກພະຍາດອາດຍາສິດເຂົ້າສັ່ງແບບບໍ່ຮູ້ສຶກໂຕ....

ພະພຸດທະເຈົ້າສອນວ່າ: ຄົນເຮົາຄວນປະຕິບັດໜ້າທີ່ດ້ວຍຄວາມສຸດຈະລິດ ຫລີກເວັ້ນຜິດຕໍກຳທຸດຈະລິດ ເພາະວ່າຄວາມຊື່ສັດບໍລິສຸດ ແມ່ນຄຸນສົມບັດສຳຄັນພາໃຫ້ລູກນ້ອງເຫລື້ອມໃສສັດທາການເປັນຜູ້ບໍລິຫານທີ່ດີຈຶ່ງບໍ່ງ່າຍດັ່ງທີ່ຄິດ!



# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

**ຕໍ່ຈາກສະບັບກ່ອນ...**

**ມາດຕາ 77 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນຮຸ້ນສ່ວນ, ເປັນນັກວິຊາການ ໃຫ້ວິສາຫະກິດກ່ຽວກັບຍານພາຫະນະທາງບົກທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງລັດຖະການ;

3. ສົມຮູ້ຮ່ວມຄິດ, ທວງເອົາ, ຂໍເອົາ, ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານກ່ຽວກັບຍານພາຫະນະທາບົກ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ພັກພວກ;

4. ຂຶ້ນທະບຽນ, ອອກປ້າຍທະບຽນ ຍານພາຫະນະທາງບົກ ໂດຍບໍ່ຖືກຕ້ອງຕາມປະເພດ ແລະ ກົດໝາຍ;

5. ຂຶ້ນທະບຽນຍານພາຫະນະທາງບົກທີ່ດັດແປງ ຮູບຮ່າງ ແລະ ເຕັກນິກໂດຍບໍ່ໄດ້ຮັບອະນຸຍາດ;

6. ໝິ່ນປະໝາດ, ໃຊ້ວາຈາ, ທ່າທີບໍ່ສຸພາບ ແລະ ນາບຂູ່ ບຸກຄົນທີ່ມາໃຊ້ບໍລິການ ກໍຄືຜູ້ຊົມໃຊ້ຍານພາຫະນະທາງບົກ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ພາກທີ XI**

**ການຄຸ້ມຄອງ ແລະ ກວດກາ ວຽກງານຍານພາຫະນະທາງບົກ**

**ໝວດທີ 1**

**ການຄຸ້ມຄອງວຽກງານຍານພາຫະນະທາງບົກ**

**ມາດຕາ 78 ອົງການຄຸ້ມຄອງວຽກງານຍານພາຫະນະທາງບົກ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຍານພາຫະນະທາງບົກ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະ ຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຍານພາຫະນະທາງບົກ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງອື່ນ ທີ່ກ່ຽວຂ້ອງ;

2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ແລະ ພະແນກການອື່ນ ທີ່ກ່ຽວຂ້ອງ;

3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ແລະ ຫ້ອງການອື່ນ ທີ່ກ່ຽວຂ້ອງ;

4. ອົງການປົກຄອງບ້ານ.

**ມາດຕາ 79 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບຍານພາຫະນະທາງບົກ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ເປັນນິຕິກຳໃຕ້ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ພ້ອມທັງປູກຈິດສຳນຶກ ໃຫ້ທົ່ວປວງຊົນ ຮັບຮູ້ ແລະ ເຂົ້າໃຈ;

4. ບຳລຸງ, ສ້າງ ແລະ ຄຸ້ມຄອງນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານຍານພາຫະນະທາງບົກ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

5. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ;

6. ອະນຸຍາດນຳເຂົ້າທາງດ້ານເຕັກນິກຍານພາຫະນະທາງບົກ ແລະ ນຳເຂົ້າ ຖັງລົດ, ຊາຊີ, ໜ່ວຍຈັກ ແລະ ອາໄຫຼ່ທີ່ນຳໃຊ້ແລ້ວ;

7. ອະນຸຍາດດັດແປງ ຮູບຮ່າງ ແລະ ເຕັກນິກ;

8. ກຳນົດ ມາດຕະຖານ ເຕັກນິກ ແລະ ເລືອກເຟັ້ນເຕັກໂນໂລຊີທີ່ເໝາະສົມກ່ຽວກັບວຽກງານຍານ ພາຫະນະທາງບົກ ພ້ອມທັງອອກຄຳແນະນຳໃນການຈັດຕັ້ງປະຕິບັດ;

9. ຄຸ້ມຄອງ ແລະ ຢັ້ງຢືນ ຜົນການທົດສອບ ຍານພາຫະນະທາງບົກ, ຊິ້ນສ່ວນ, ວັດສະດຸອຸປະກອນທີ່ຜະລິດ ແລະ ປະກອບ ຢູ່ ສປປລາວ;

10. ກຳນົດມາດຕະຖານເຕັກນິກ, ໃບທະບຽນ, ປ້າຍທະບຽນ, ສູນກວດກາເຕັກນິກ ແລະ ອູ່ສ້ອມ ແປງລົດ ລວມທັງຄຸ້ມຄອງຖານຂໍ້ມູນ, ສະຖິຕິ ກ່ຽວກັບການຂຶ້ນທະບຽນລົດ ໃນຂອບເຂດທົ່ວປະເທດ;

11.ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງ

**ອ່ານຕໍ່ສະບັບໜ້າ...**




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນຸຄຳ ພິພັດເສລີ**

ການອະທິບາຍຄຳສັບ ໃນມາດຕາ 3 (ປັບປຸງ) ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ) ມີທັງໝົດ 36 ຂໍ້. ໜັງສືພິມຜູ້ແທນປະຊາຊົນ ສະບັບນີ້ ຈະນຳສະເໜີຕໍ່ບັນດາທ່ານຜູ້ອ່ານ 2 ຂໍ້ ແລະ ອີກ 34 ຂໍ້ ຈະພິມໃນສະບັບຕໍ່ໆໄປ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ອົງການໄອຍະການ ໝາຍເຖິງ ອົງການໄອຍະການປະຊາຊົນ ແລະ ອົງການໄອຍະການທະຫານ;

2. ສານ ໝາຍເຖິງ ສານປະຊາຊົນ ແລະ ສານທະຫານ;

# ມອບຫລຽນໄຊສູງສົ່ງທີ່ສຸດ ໃຫ້ແກ່ອະດີດນາຍົກລັດຖະມົນຕີ Shinzo Abe ຍີ່ປຸ່ນ

**ແປ ແລະ ຮຽບຮຽງ: ພົດສະໄໝ ບຸນວິໄລ**



ທ່ານ Shinzo Abe ແມ່ນນາຍົກລັດຖະມົນຕີຄົນທີ 4 ຂອງຍີ່ປຸ່ນ ທີ່ໄດ້ຮັບສາຍຄໍຫລຽນໄຊດອກໄມ້ເບັນຈະມາດຕາມລັດຖະທຳມະນູນສະໄໝຫລັງສົງຄາມ, ພາຍຫລັງບັນດາທ່ານອະດີດນາຍົກລັດຖະມົນຕີ Shigeru Yoshida, Eisaku Sato ແລະ Yasuhiro Nakasone.

ວັນທີ 11 ກໍລະກົດ, ລັດຖະບານຍີ່ປຸ່ນ ໄດ້ມອບສາຍຄໍຫລຽນໄຊດອກເບັນຈະມາດ ໃຫ້ແກ່ທ່ານອະດີດນາຍົກລັດຖະມົນຕີຍີ່ປຸ່ນ Shinzo Abe, ທີ່ເສຍຊີວິດຍ້ອນຖືກຍິງໃນການຂົນຂວາຍຫາສຽງເລືອກຕັ້ງໃຫ້ແກ່ຜູ້ສະຫມັກເລືອກຕັ້ງຂອງພັກປະຊາທິປະໄຕເສລີ ກໍາອໍານາດຢູ່ນະຄອນ Nara, ທາງທິດຕາເວັນຕົກຍີ່ປຸ່ນ ໃນວັນທີ 8 ກໍລະກົດທີ່ຜ່ານມາ. ທ່ານ Shinzo Abe ແມ່ນນາຍົກລັດຖະມົນຕີຄົນທີ 4 ຂອງຍີ່ປຸ່ນ ທີ່ໄດ້ຮັບສາຍຄໍຫລຽນໄຊດອກເບັນຈະມາດຕາມລັດຖະທຳມະນູນສະໄໝຫລັງສົງຄາມ, ພາຍຫລັງບັນດາທ່ານອະດີດນາຍົກລັດຖະມົນຕີ Shigeru Yoshida, Eisaku Sato ແລະ Yasuhiro Nakasone. ຫລຽນໄຊດອກເບັນຈະມາດ ແມ່ນຫລຽນໄຊອັນສູງສົ່ງທີ່ສຸດຂອງຍີ່ປຸ່ນ ໄດ້ເຮັດຈາກຄຳບໍລິສຸດ ແລະ ໂດຍພະເຈົ້າຈັກກະພັດຍີ່ປຸ່ນມອບໃຫ້. ຫລຽນໄຊນີ້ເຄີຍມອບໃຫ້ການນຳຕ່າງປະເທດບາງທ່ານເມື່ອມາຢ້ຽມຢາມຍີ່ປຸ່ນ.

ໃນວັນດຽວກັນ, ທ່ານນາຍົກລັດຖະມົນຕີ ຍີ່ປຸ່ນ Kishida Fumio ໃຫ້ຮູ້ວ່າ ທ່ານຈະມານະພະຍາຍາມປະຕິບັດຄວາມມຸ່ງຫວັງຂອງທ່ານອະດີດນາຍົກລັດຖະມົນຕີ Shinzo Abe, ພາຍຫລັງພັກປະຊາທິປະໄຕເສລີ (LDP) ກໍາອໍານາດຍາດໄດ້ໄຊຊະນະໃນການຫາສຽງເລືອກຕັ້ງຢູ່ສະພາສູງໃນວັນທີ 10 ກໍລະກົດ. ທ່ານນາຍົກລັດຖະມົນຕີ Kishida Fumio ຢັ້ງຢືນວ່າ ຈະຊຸກຍູ້ການປັບປຸງລັດຖະທຳມະນູນສັນຕິພາບໂດຍໄວທີ່ສຸດເທົ່າທີ່ຈະໄວໄດ້ ແລະ ມານະພະຍາຍາມແກ້ໄຂບັນຫາພົນລະເມືອງຍີ່ປຸ່ນ ຖືກລັກພາຕົວ ຢູ່ ສ.ເກົາຫລີ ໃນຊຸມປີ 1970-1980. ນີ້ແມ່ນບັນດາບັນຫາທີ່ທ່ານອະດີດນາຍົກລັດຖະມົນຕີ Shinzo Abe ພວມເດີນຕາມໃນໄລຍະທີ່ພວມປະຕິບັດຕຳແໜ່ງ.

**ແຫລ່ງຄັດຈາກ: vovworld.vn**

# ອິນໂດເນເຊຍ ຊຸກຍູ້ການຮ່ວມສຳພັນຊຳລະຂ້າມຊາຍແດນກັບບັນດາປະເທດອາຊຽນ

**ແປ ແລະ ຮຽບຮຽງ: ພົດສະໄໝ ບຸນວິໄລ**

ອິນໂດເນເຊຍ, ໄທ, ມາເລເຊຍ, ສິງກະໂປ ແລະ ຟີລິບປິນ ມີພື້ນຖານໂຄງລ່າງກ່ຽວກັບລະບົບ QR code ຢູ່ແລ້ວ ເພື່ອປະຕິບັດການທຳທຸລະກຳຂ້າມຊາຍແດນ.

ເພື່ອແນໃສ່ຊຸກຍູ້ການເຊື່ອມໂຍງດ້ານການເງິນ, ຫັນການຄ້າພາກພື້ນເປັນດີຈີຕອນ, ການບໍລິການຊຳລະດ້ວຍ QR code ຂອງ ອິນໂດເນເຊຍ (ລະບົບ QRIS) ຈະມີໜ້າຢູ່ 4 ປະເທດສະມາຊິກອາຊຽນ ຫລັງຈາກທ່ານ ນາງ Filianingsih Hendarta, ຫົວໜ້າພາກສ່ວນຮັບຜິດຊອບນະໂຍບາຍລະບົບຊຳລະຂອງທະນາຄານສູນກາງອິນໂດເນເຊຍ ໄດ້ຍົກໃຫ້ເຫັນບາງຕອນສຳຄັນວ່າ: ການບໍລິການຮ່ວມສຳພັນຊຳລະຂ້າມຊາຍແດນເອື້ອອຳນວຍຄວາມສະດວກໃຫ້ຜູ້ບໍລິໂພກ ແລະ ຜູ້ຄ້າຂາຍ ຢູ່ 5 ປະເທດອາຊຽນປະຕິບັດ ແລະ ຍອມຮັບການຊຳລະດ້ວຍ QR code. ສຳລັບຮູບການຮ່ວມສຳພັນນີ້ ຈະຊ່ວຍຮັກສາເສດຖະກິດມະຫາພາກຂອງບັນດາປະເທດອາຊຽນ ເປັນປົກກະຕິດ້ວຍວິທີຊຸກຍູ້ການນຳໃຊ້ໃນຂອບເຂດການຊຳລະດ້ວຍເງິນຕາພາຍໃນປະເທດ ຢ່າງກວ້າງຂວາງຂຶ້ນຕື່ມອີກ.



ປັດຈຸບັນ, ລະບົບຊຳລະໄວ QRIS ຂອງອິນໂດເນເຊຍ ພວມໃຊ້ທົດລອງຢູ່ປະເທດໄທ, ມາເລເຊຍ ແລະ ອາດຈະເປີດກວ້າງໄປທົ່ວປະເທດອາຊຽນ, ຍິ່ງໄປກວ່ານັ້ນແມ່ນຂ້າມພາກພື້ນ.

**ແຫລ່ງຄັດຈາກ: vovworld.vn**

ທະນາຄານພັດທະນາລາວ LDB Bank

ທະນາຄານພົງສະຫວັນ Phongsavanh BANK

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາການັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ